# ເຊໂປນມາຍທູເດ

**CHIFENG GOLD | SEPON**

## ໜັງສືຂ່າວ ຂອງ ບໍລິສັດ ລ້ານຊ້າງ ມິເນໂຣນສ໌ ຈຳກັດ

### ຫົວຂໍ້ໃນສະບັບນີ້

**ທັນວາ 2023**


ຄຳເຫັນຂອງ ທ່ານ ທອງພັດ ອິນທະວົງ, ກ່າວໃນພິທີສະເຫຼີມສະຫຼອງ ບໍ່ຄຳ-ທອງ ເຊໂປນ ຄົບຮອບ 20 ປີ ໜ້າ 4



LXML ເຊໂປນ ໄດ້ຮັບລາງວັນອັນຊົງກຽດດີເດັ່ນອາຊຽນ" ດ້ານການຜະລິດແຮ່ທາດ - ໂລຫະ ປະຈຳປີ 2023 ໜ້າ 5



LXML ເຊໂປນ ມອບ US$5.903 ລ້ານ ຄ່າພາສີຊັບພະຍາກອນແຮ່ທາດ ໄຕມາດ 3 ປີ 2023 ໃຫ້ແກ່ລັດຖະບານລາວ ໜ້າ 14




LXML ເຊໂປນ ມອບຫໍພິພິຕະພັນກາງແຈ້ງຂຸມຂຸດຄົ້ນຈຳລອງຍຸກຫີນໃໝ່ 6,000-4,000 ປີກ່ອນ ໃຫ້ແກ່ຊາວບ້ານນ້ຳປະເຄນ ໜ້າ 18







# ຊົມເຊີຍ ບໍ່ຄຳ-ທອງ ເຊໂປນ ເນື່ອງໃນໂອກາດວັນຄົບຮອບ 20 ປີ ຢ່າງສຸດໃຈ

ບໍລິສັດ ລ້ານຊ້າງ ມິເນໂຣນສ໌ ຈຳກັດ (ລຊມລ) ໄດ້ສະເຫຼີມສະຫຼອງ ເນື່ອງໃນໂອກາດຄົບຮອບ 20 ປີ ຄວາມສຳເລັດໃນການຂຸດຄົ້ນ-ຜະລິດຂອງ ບໍ່ຄຳ-ທອງ ເຊໂປນ. ໃຫ້ກຽດເຂົ້າຮ່ວມງານສະເຫຼີມສະຫຼອງຄັ້ງນີ້ມີ ການນຳອາວຸໂສຂັ້ນສູນກາງຈາກພາກລັດຖະບານ, ການນຳຈາກບໍລິສັດແມ່ ຊີເຟິງ ໂກນລ໌ ແລະ ຜູ້ບໍລິຫານຂອງ ລຊມລ, ພະແນກກົມກອງກ່ຽວຂ້ອງຂອງລັດຖະບານ, ປະທານສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ, ຜູ້ມີສ່ວນຮ່ວມທີ່ກ່ຽວຂ້ອງຫຼັກໆ, ຄູ່ຮ່ວມງານ, ແລະ ບັນດາແຂກຜູ້ມີກຽດ. ການສະເຫຼີມສະຫຼອງນີ້ແມ່ນນິມິດໝາຍທີ່ສຳຄັນ ເຊິ່ງຈັດຂຶ້ນທີ່ນະຄອນຫຼວງວຽງຈັນ ໃນວັນທີ 8 ທັນວາ 2023.

ໃນຕໍ່ໜ້າ, ບໍລິສັດ ຊີເຟິງ ລຊມລ ມີເປົ້າໝາຍບັນລຸ ແຜນງານໜຶ່ງແລວໜຶ່ງເສັ້ນທາງ ແລະ ຄວາມຕ້ອງການສອງຝ່າຍຂອງ ສປປ ລາວ ແລະ ສປ ຈີນ ກໍຄື ປະຊາຊົນຂອງທັງສອງປະເທດ. ໂຄງການບໍ່ຄຳ-ເຊໂປນ ສືບຕໍ່ນຳຜົນປະໂຫຍດມາໃຫ້ແກ່ ຊຸມຊົນທ້ອງຖິ່ນ, ຜູ້ລົງທຶນ, ພະນັກງານ ແລະ ຜູ້ມີສ່ວນຮ່ວມທີ່ກ່ຽວຂ້ອງ ຢູ່ໃນ ສປປ ລາວ. ບໍລິສັດໝາຍໝັ້ນຕໍ່ການເຕີບໂຕຢ່າງຍືນຍົງຢູ່ໃນ ສປປ ລາວ ເພື່ອປູທາງ-ວາງພື້ນຖານໃຫ້ແກ່ຄວາມຈະເລີນຮຸ່ງເຮືອງໄປອີກສອງທົດສະວັດ ຢູ່ໂຄງການບໍ່ຄຳ-ທອງ ເຊໂປນ. ທ່ານ ຫວາງ ຈຽນຫົວ, ປະທານບໍລິສັດ ຊີເຟິງ ໂກນລ໌ ເຊິ່ງເປັນບໍລິສັດແມ່ຢູ່ ສປ ຈີນ, ທ່ານຍັງໄດ້ກ່າວຕື່ມວ່າ "ໃນຂະນະທີ່ພວກເຮົາສະເຫຼີມສະຫຼອງຜົນສຳເລັດຂອງ ບໍ່ຄຳ-ທອງ ເຊໂປນ, ພວກເຮົາກໍຍັງຈະສືບຕໍ່ໝາຍໝັ້ນຕໍ່ຫຼັກການປະຕິບັດທີ່ດີທີ່ສຸດ ແລະ ຄວາມຮັບຜິດຊອບຕໍ່ສັງຄົມຂອງອົງກອນໃຫ້ດີທີ່ສຸດ. ການທົບທວນຄືນເສັ້ນທາງທີ່ໄດ້ນຳ ລຊມລ ມາສູ່ຈຸດນີ້ໃນມື້ນີ້ແມ່ນມີຄວາມສຳຄັນ. ລຊມລ ໄດ້ພົບພໍ້ຄວາມທ້າທາຍຫຼາຍປະການ, ແຕ່ຍ້ອນຄວາມມຸ່ງໝັ້ນ ແລະ ຄວາມມານະອົດທົນ ພວກເຮົາຈຶ່ງສາມາດສ້າງຜົນງານດ້ານທຸລະກິດຢ່າງດີເລີດ ແລະ ຜ່ານຜ່າຄວາມຫຍຸ້ງຍາກລຳບາກທັງໝົດປວງຕ່າງໆ."

ປະທານ ລຊມລ ທ່ານ ກ່າວ ປົ່ວ ໄດ້ຍົກໃຫ້ເຫັນຜົນສຳເລັດອັນສຳຄັນຂອງ ບໍ່ຄຳ-ທອງ ເຊໂປນ ໃນການນຳເອົາເງິນຕາຕ່າງປະເທດເຂົ້າມາຍັງ ສປປ ລາວ ແລະ ການປັບປຸງຊີວິດການເປັນຢູ່ຂອງປະຊາຊົນທ້ອງຖິ່ນຜ່ານ ໂຄງການ-ແຜນງານພັດທະນາຊຸມຊົນ ຢູ່ເມືອງວິລະບູລີ. ທ່ານໄດ້ຍົກໃຫ້ເຫັນວ່າ ລຊມລ ຍາມໃດກໍຖື ການພັດທະນາພະນັກງານຄົນລາວເປັນບູລິມະສິດ ດ້ວຍການສ້າງສະພາບແວດລ້ອມການເຮັດວຽກທີ່ປອດໄພ, ການເຂົ້າ

*ຕໍ່ໜ້າ 2...*




*ຈາກໜ້າ 1...*

ເຖິງການຮັກສາສຸຂະພາບທີ່ມີຄຸນນະພາບ ແລະ ການຝຶກອົບຮົມເພື່ອຮັບປະກັນຄວາມສຳເລັດຂອງ ການດຳເນີນງານ-ຂຸດຄົ້ນ, ການຜະລິດຂອງບໍ່ຄຳ-ທອງ ເຊໂປນ.

ນອກຈາກນັ້ນ, ທ່ານ ກ່າວ ປົ໋ວ, ປະທານ ລຊມລ ໄດ້ສະແດງຄວາມຮູ້ບຸນຄຸນຢ່າງສູງ ຕໍ່ການສະໜັບສະໜູນທີ່ໄດ້ຮັບຈາກລັດຖະບານຂັ້ນສູນກາງ, ຂັ້ນແຂວງ ແລະ ຂັ້ນເມືອງ; ຈາກ ຊຸມຊົນທ້ອງຖິ່ນ, ພະນັກງານຂອງບໍລິສັດ, ຜູ້ຮັບເໝົາ, ແລະ ຜູ້ມີສ່ວນຮ່ວມທີ່ກ່ຽວຂ້ອງ. ລຊມລ ຈະສືບຕໍ່ດຳເນີນ-ຂຸດຄົ້ນ-ຜະລິດບໍ່ຄຳ-ທອງ ເຊໂປນ ເພື່ອການພັດທະນາເສດຖະກິດ-ສັງຄົມ ຂອງ ສປປ ລາວ ໂດຍປະກອບສ່ວນຜ່ານການຈ່າຍຄ່າຊັບພະຍາກອນແຮ່ທາດ, ອາກອນກຳໄລ, ເງິນປັນຜົນ, ຄ່າເຊົ່າສຳປະທານທີ່ດິນ, ກອງທຶນພັດທະນາຊຸມຊົນ, ກອງທຶນເພື່ອສະໜັບສະໜູນຄອບຄົວຜູ້ດ້ອຍໂອກາດ, ອາກອນລາຍໄດ້ສ່ວນບຸກຄົນ, ແລະ ການສະໜັບສະໜູນຊຸມຊົນສຳລັບພະນັກງານ. ລຊມລ ຍາມໃດກໍຖືເປັນບູລິມະສິດ ການນຳໃຊ້ເຕັກນິກການຂຸດຄົ້ນບໍ່ແຮ່ທີ່ກ້າວໜ້າ, ວຽກງານຟື້ນຟູ ແລະ ການປົກປັກຮັກສາສິ່ງແວດລ້ອມຕາມມາດຕະຖານສາກົນ.

ໃນໄລຍະ 20 ປີຜ່ານມາ, ບໍລິສັດ ລ້ານຊ້າງ ມິເນໂຣນສ໌ ຈຳກັດ ໄດ້ກາຍເປັນສັນຍາລັກຂອງການຂຸດຄົ້ນບໍ່ແຮ່ ແລະ ການເຕີບໂຕທີ່ດີເລີດຢູ່ໃນ ສປປ ລາວ, ຮັກສາກຽດຕິສັກຂອງບໍລິສັດຊັ້ນ A+. ໂຄງການບໍ່ຄຳ-ທອງ ເຊໂປນ ໄດ້ມີຄວາມພະຍາຍາມຢ່າງສຸດຄວາມສາມາດເພື່ອສົ່ງເສີມການພັດທະນາແບບຍືນຍົງ ແລະ ການເປັນຜູ້ນຳດ້ານສິ່ງແວດລ້ອມໃນອຸດສາຫະກຳບໍ່ແຮ່. ຄວາມພະຍາຍາມເຫຼົ່ານີ້ລວມໄປເຖິງການຈັດຕັ້ງປະຕິບັດວຽກງານຟື້ນຟູ ແລະ ຕິດຕາມສິ່ງແວດລ້ອມຢ່າງເຂັ້ມງວດ. ດ້ວຍເຫດນັ້ນ, ໂຄງການບໍ່ຄຳ-ທອງ ເຊໂປນຈຶ່ງໄດ້ກາຍເປັນຜູ້ຜະລິດຄຳ ແລະ ທອງທີ່ໃຫຍ່ ແລະ ມີຄວາມຍືນຍົງທີ່ສຸດຢູ່ໃນ ສປປ ລາວ.

ລຊມລ ໄດ້ລົງທຶນຫຼາຍກວ່າ US$55 ລ້ານເຂົ້າໃນການປັບປຸງໂຄງລ່າງພື້ນຖານ ລວມທັງ US$34 ລ້ານເຂົ້າໃນການສ້າງຕາຂ່າຍໄຟຟ້າແຫ່ງຊາດຈາກເມືອງທ່າແຂກໄປ ຫາ ມະຫາໄຊ ຜ່ານ ບໍ່ຄຳ-ທອງ ເຊໂປນ ເພື່ອຊື້ໄຟຟ້າຈາກ ລັດວິສາຫະກິດໄຟຟ້າລາວ. ລຊມລ ໄດ້ຂະຫຍາຍໂຄງການພັດທະນາຊຸມຊົນໄປຍັງເຂດຊົນນະບົດ ແລະ ຫ່າງໄກສອກຫຼີກ ກໍຄື ໄດ້ລົງທຶນປະມານ US$56 ລ້ານເຂົ້າໃນການເກັບກູ້ລະເບີດຕົກຄ້າງທີ່ຍັງບໍ່ທັນແຕກ (UXO).

ລຊມລ ເປັນ ບໍລິສັດບໍ່ແຮ່ທີ່ຂຶ້ນທະບຽນທີ່ ສປປ ລາວ ໂດຍ ບໍລິສັດ ຊີເຟິງ ຈິຫຼົງ ໂກນລ໌ ມາຍນິງ ຖືຫຸ້ນ 90% ແລະ ລັດຖະບານລາວ 10%. ລຊມລ ເຮັດວຽກປະສານສົມທົບກັບຫຼາຍກະຊວງຂອງ ສປປ ລາວ ເຊິ່ງເປັນການຮ່ວມມືພາກລັດ-ເອກະຊົນທີ່ເປັນສັນຍາລັກສະແດງໃຫ້ເຫັນວ່າລັດຖະບານ ແລະ ບໍລິສັດເອກະຊົນເຮັດວຽກຮ່ວມກັນແນວໃດເພື່ອຜົນປະໂຫຍດຂອງສ່ວນລວມ.

ຕັ້ງແຕ່ເລີ່ມດຳເນີນງານໃນປີ 2003, ບໍ່ຄຳ-ທອງ ເຊໂປນໄດ້ຜະລິດ ຄຳຫຼາຍກວ່າ 1,5 ລ້ານອອນ ແລະ ທອງ 1,1 ລ້ານໂຕນ ອັນໄດ້ສ້າງລາຍຮັບໂດຍກົງຫຼາຍກວ່າ US$1,7 ຕື້ ໃຫ້ແກ່ລັດຖະບານລາວ ໃນຮູບແບບການຈ່າຍພາສີອາກອນ, ຄ່າຊັບພະຍາກອນແຮ່ທາດ, ແລະ ເງິນປັນຜົນໃຫ້ແກ່ ສປປ ລາວ. ນອກຈາກນັ້ນ ບໍ່ຄຳ-ທອງ ເຊໂປນຍັງໄດ້ສ້າງຜົນປະໂຫຍດທາງອ້ອມຜ່ານການສ້າງວຽກເຮັດງານທຳ, ການຝຶກອົບຮົມ, ການພັດທະນາຊຸມຊົນ, ການຈ້າງງານ ແລະ ສ້າງລາຍໄດ້ໃຫ້ແກ່ຄູ່ຮ່ວມທຸລະກິດ ແລະ ຜູ້ສະໜອງທ້ອງຖິ່ນ. ໂຄງການພັດທະນາຊຸມຊົນຂອງບໍ່ຄຳ-ທອງ ເຊໂປນ ໄດ້ສະໜອງ ຫຼາຍກວ່າ US$20 ລ້ານ ໃຫ້ແກ່ ປະຊາຊົນ 40.000 ຄົນ ອັນໄດ້ສ້າງຜົນປະໂຫຍດໃຫຍ່ຫຼວງໃຫ້ແກ່ເມືອງວິລະບູລີ, ສ້າງລາຍຮັບໃຫ້ແກ່ກຸ່ມນັກທຸລະກິດທ້ອງຖິ່ນເຖິງ US$50 ລ້ານ ເປັນລາຍໄດ້ຂອງຊຸມຊົນ.

ນອກຈາກນັ້ນ, ໂຄງການ ບໍ່ຄຳ-ທອງ ເຊໂປນ ຍັງເປັນຕົວຢ່າງທີ່ພົ້ນເດັ່ນຂອງການຂຸດຄົ້ນບໍ່ແຮ່ ແລະ ການພັດທະນາຢ່າງມີຄວາມຮັບຜິດຊອບຢູ່ໃນພາກພື້ນອາຊີຕາເວັນອອກສ່ຽງໃຕ້. ມາດຕະຖານດ້ານສິ່ງແວດລ້ອມຂອງ ລຊມລ ໄດ້ເປັນທີ່ຍອມຮັບໃຫ້ເປັນແບບຢ່າງທີ່ດີເລີດຢູ່ໃນ ສປປ ລາວ. ມາຮອດປັດຈຸບັນ, ລຊມລ ໄດ້ລົງທຶນຫຼາຍກວ່າ US$20 ລ້ານ ເຂົ້າໃນການຄຸ້ມຄອງສິ່ງແວດລ້ອມ, ວຽກງານຟື້ນຟູ ແລະ ຕິດຕາມສິ່ງແວດລ້ອມ. ລຊມລ ເປັນໜຶ່ງໃນບໍລິສັດທຳອິດໃນ ສປປ ລາວ ແລະ ພາກພື້ນອາຊີຕາເວັນອອກສ່ຽງໃຕ້ທີ່ໄດ້ຮັບ ການຢັ້ງຢືນມາດຕະຖານສາກົນໃນລະບົບການຄຸ້ມຄອງສິ່ງແວດລ້ອມ ISO 14001.

ຄວາມມຸ່ງໝັ້ນຂອງ ລຊມລ ຕໍ່ການປະຕິບັດງານທີ່ດີເລີດໄດ້ເປັນຜົນເຮັດໃຫ້ ບໍລິສັດໄດ້ຮັບກຽດຕິສັກ ຂັ້ນ A+ ຈາກລັດຖະບານລາວ ມາເປັນທົດສະວັດ ແລະ ຍິ່ງໄປກວ່ານັ້ນ, ບໍລິສັດກໍໄດ້ຮັບຫຼາຍລາງວັນຍ້ອງຍໍສັນລະເສີນສຳລັບການປະກອບສ່ວນຕໍ່ການພັດທະນາເສດຖະກິດ-ສັງຄົມໃນ ສປປ ລາວ. ລາງວັນເຫຼົ່ານີ້ລວມໄປເຖິງ ລາງວັນຮອງອັນດັບໜຶ່ງຂອງລາງວັນອາຊຽນດ້ານບໍ່ແຮ່ດີເດັ່ນ 2023 ແລະ ລາງວັນນັກທຸລະກິດດີເດັ່ນ 2023 ຂອງລາວ ເຊິ່ງຍ້ອງຍໍບໍລິສັດທີ່ນຳໜ້າໃນການປະຕິບັດຕາມມາດຕະຖານສາກົນດ້ານສິ່ງແວດລ້ອມ ແລະ ສັງຄົມ. ນອກຈາກນັ້ນ, ບໍລິສັດຍັງໄດ້ຮັບລາງວັນບໍລິສັດດີເດັ່ນຂອງລາວ 2021 ໃນການສະກັດກັ້ນໂຄວິດ-19, ລາງວັນອາຊຽນດ້ານບໍ່ແຮ່ປີ 2017 ແລະ 2019, ລາງວັນອາຊຽນດ້ານການຂຸດຄົ້ນບໍ່ແຮ່ດີເລີດ 2016 ແລະ ລາງວັນອາຊຽນໃນວຽກງານພັດທະນາຊຸມຊົນ ແລະ ສັງຄົມແບບຍືນຍົງ.






# ລັດຖະບານລາວ ມອບຫຼຽນໄຊແຮງງານ ຊັ້ນ III ໃຫ້ແກ່ ບໍລິສັດ ລ້ານຊ້າງ ມິເນໂຣນສ໌ ຈຳກັດ



ເມື່ອບໍ່ດົນມານີ້, ບໍລິສັດ ລ້ານຊ້າງ ມິເນໂຣນສ໌ ຈຳກັດ (ລຊມລ) ໄດ້ຮັບໃບຢັ້ງຢືນ ແລະ ຫຼຽນໄຊແຮງງານ ຊັ້ນ 3 ຈາກ ພະນະທ່ານ ທອງລຸນ ສີສຸລິດ, ປະທານປະເທດ ແຫ່ງ ສປປ ລາວ ຊຶ່ງຫຼຽນໄຊແຮງງານດັ່ງກ່າວ ແມ່ນເປັນການຮັບຮູ້ເຖິງຜົນສຳເລັດອັນພົ້ນເດັ່ນຂອງ ບໍລິສັດ ທີ່ໄດ້ເຂົ້າມາດຳເນີນງານ ພັດທະນາ ຢູ່ ສປປ ລາວ ແລະ ການປະຕິບັດງານທີ່ສ້າງຜົນສຳເລັດທີ່ສະຫງ່າງາມໃນປະເທດລາວ. ລາງວັນອັນມີກຽດນີ້ ໄດ້ຮັບຮູ້ເຖິງຜົນງານດີເດັ່ນຂອງບໍລິສັດ ແລະ ໃນປະກອບສ່ວນອັນສຳຄັນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງລາວ. ໃນຖານະທີ່ເປັນບໍລິສັດຊັ້ນນຳທາງດ້ານອຸດສາຫະກຳການຂຸດຄົ້ນບໍ່ແຮ່ໃນລາວ, ລຊມລ ໄດ້ຍຶດໝັ້ນແນວທາງ ທາງດ້ານນະວັດຕະກຳໃໝ່, ຄວາມເປັນມືອາຊີບ ແລະ ການດຳເນີນງານຢ່າງມີຄວາມຮັບຜິດຊອບ, ລຊມລ ຍາມໃດຖືຄວາມສຳຄັນດ້ານຄວາມປອດໄພເປັນຫຼັກການພື້ນຖານ. ການບໍລິຫານ-ຄຸ້ມຄອງທີ່ດີ, ໝັ້ນຄົງ ແລະ ກາຍເປັນແບບຢ່າງທີ່ດີ ທີ່ໄດ້ສ້າງສິ່ງອຳນວຍຄວາມສະດວກໃຫ້ແກ່ການພັດທະນາຊັບພະຍາກອນແຮ່ທາດຢ່າງມີປະສິດທິຜົນ ແລະ ຍືນຍົງຕໍ່ສິ່ງແວດລ້ອມ, ເປັນພື້ນຖານທີ່ເຂັ້ມແຂງໃຫ້ແກ່ຄວາມກ້າວໜ້າທາງດ້ານເສດຖະກິດຂອງ ສປປ ລາວ.

ຕະຫຼອດໄລຍະ 20 ປີແຫ່ງການດຳເນີນງານຂອງ ບໍ່ຄຳທອງເຊໂປນ ໄດ້ໃຊ້ງົບປະມານຫຼາຍກວ່າ 4 ລ້ານໂດລາສະຫະລັດ ເພື່ອຝຶກອົບຮົມແຮງງານລາວ ແລະ ເປີດໂອກາດຢ່າງສະເໝີພາບໃຫ້ແກ່ກຳລັງແຮງງານລາວໄດ້ໄປຝຶກທັກສະທັງພາຍໃນ ແລະ ຕ່າງປະເທດ, ສົ່ງເສີມການພັດທະນາຕົນເອງ, ເກັບກ່ຽວປະສົບການ ແລະ ການປະຕິບັດງານທີ່ດີທີ່ສຸດຈາກພາກສ່ວນຕ່າງໆ ໃນການດຳເນີນງານຢູ່ພາກສະໜາມ.

ເປັນສັກຂີພິຍານໂດຍ ພະນະທ່ານ ສອນໄຊ ສີພັນດອນ, ນາຍົກລັດຖະມົນຕີແຫ່ງ ສປປ ລາວ, ຕາງໜ້າໃຫ້ລັດຖະບານລາວ ໃຫ້ກຽດຂຶ້ນມອບໃບຢັ້ງຢືນ ແລະ ຫຼຽນໄຊແຮງງານໃຫ້ແກ່ ລຊມລ ໂດຍ ພະນະທ່ານ ໂພໄຊ ໄຊຍະສອນ, ລັດຖະມົນຕີກະຊວງພະລັງງານ ແລະ ບໍ່ແຮ່, ຕາງໜ້າໃຫ້ບໍລິສັດ ຂຶ້ນຮັບຫຼຽນໄຊ ໂດຍ ທ່ານ ຫວ່າງ ຈຽນຫົວ, ປະທານບໍລິສັດ Chifeng Gold, ທ່ານ ກ່າວ ປົ໋ວ, ຜູ້ອຳນວຍການ ແລະ ຮອງປະທານ Chifeng Gold, ປະທານ ບໍລິສັດ ລຊມລ.

ໃນໂອກາດດັ່ງກ່າວ ທ່ານ ປະທານ ຫວ່າງ ຈຽນຫົວ, ຕາງໜ້າໃຫ້ບໍລິສັດ Chifeng Gold ແລະ ລຊມລ, ໄດ້ກ່າວສະແດງຄວາມຂອບໃຈ ແລະ ມຸ່ງໝັ້ນຢ່າງຈິງໃຈ ທີ່ຈະສືບຕໍ່ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງ ສປປ ລາວ, ພ້ອມທັງຖືເອົາລາງວັນອັນສົມກຽດສັກສີ ແລະ ຄວາມໄວ້ເນື້ອເຊື່ອໃຈທີ່ລັດຖະບານລາວມອບໃຫ້ ບໍລິສັດ ນຳໄປຜົນຂະຫຍາຍຈັດຕັ້ງປະຕິບັດໃຫ້ດີທີ່ສຸດໃນອະນາຄົດ.

ນອກຈາກຄວາມມຸ່ງໝັ້ນໃນການພັດທະນາເສດຖະກິດແລ້ວ, ລຊມລ ຍັງອຸທິດຕົນເພື່ອການພັດທະນາແບບຍືນຍົງໃນລາວ ເຮັດໃຫ້ ລຊມລ ໄດ້ ຮັບກຽດຕິສັກຂັ້ນ A+ ຈາກກະຊວງພະລັງງານ ແລະ ບໍ່ແຮ່. ບໍລິສັດໄດ້ປະຕິບັດຂໍ້ລິເລີ່ມຕ່າງໆເພື່ອຫຼຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມ, ລວມທັງໂຄງການກໍ່ສ້າງ ແລະ ຟື້ນຟູປ່າເພື່ອຟື້ນຟູພູມສັນຖານຫຼັງການຂຸດຄົ້ນບໍ່ແຮ່. ພ້ອມກັນນັ້ນ, ຍັງໄດ້ຕັ້ງໜ້າເຂົ້າຮ່ວມບັນດາໂຄງການພັດທະນາຊຸມຊົນ, ຊຸກຍູ້ການສຶກສາ, ສາທາລະນະສຸກ, ປັບປຸງພື້ນຖານໂຄງລ່າງ ເພື່ອຍົກສູງຄຸນນະພາບຊີວິດຂອງປະຊາຊົນ. ຄວາມພະຍາຍາມໃນການພັດທະນາແບບຍືນຍົງຂອງ ລຊມລ ບໍລິສັດໄດ້ກຳນົດວິໄສທັດໄລຍະຍາວຂອງຕົນໃນການສ້າງຜົນປະໂຫຍດທີ່ດີ ແລະ ຍືນຍົງໃຫ້ແກ່ປະຊາຊົນ ແລະ ສິ່ງແວດລ້ອມຂອງ ສປປ ລາວ ໃຫ້ສອດຄ່ອງກັບຈຸດປະສົງຂອງລັດຖະບານໃນການນຳໃຊ້ຊັບພະຍາກອນຢ່າງມີຄວາມຮັບຜິດຊອບ ແລະ ການອະນຸລັກສິ່ງແວດລ້ອມແບບຍືນຍົງ.

ລຊມລ ຍັງຄົງຍຶດໝັ້ນຕໍ່ເປົ້າໝາຍການພັດທະນາແບບຍືນຍົງຂອງຕົນ, ສືບຕໍ່ຊອກຫາວິທີການປະດິດສ້າງເພື່ອຫຼຸດຜ່ອນຮ່ອງຮອຍການສ້າງຜົນກະທົບດ້ານລົບຕໍ່ລະບົບຂອງຕົນໃຫ້ໜ້ອຍທີ່ສຸດ ໃນຂະນະທີ່ສ້າງຜົນກະທົບທາງບວກສູງສຸດຕໍ່ກັບຊຸມຊົນ ແລະ ສະພາບແວດລ້ອມທີ່ພວມດຳເນີນງານຢູ່. ບໍລິສັດ ຫວັງວ່າຈະສືບຕໍ່ປະກອບສ່ວນເຂົ້າໃນການພັດທະນາແບບຍືນຍົງ ແລະ ສ້າງຄວາມຈະເລີນຮຸ່ງເຮືອງໃຫ້ແກ່ປະເທດລາວ, ສ້າງຄວາມສອດຄ່ອງກັບບຸລິມະສິດການພັດທະນາ ແລະ ຄວາມພະຍາຍາມປົກປັກຮັກສາສິ່ງແວດລ້ອມ ຂອງປະເທດຊາດ.



# ຄຳເຫັນຂອງ ທ່ານ ທອງພັດອິນທະວົງ, ຮອງລັດຖະມົນຕີ ກະຊວງພະລັງງານ ແລະ ບໍ່ແຮ່ ຜູ້ຕາງໜ້າຄະນະຄຸ້ມຄອງໂຄງ ການບໍ່ຄຳ-ທອງເຊໂປນ, LXML ກ່າວໃນພິທີສະເຫຼີມສະຫຼອງບໍ່ ຄຳ-ທອງ ເຊໂປນ ຄົບຮອບ 20 ປີ,

- ຂໍຮຽນ ທ່ານ ສອນໄຊ ສີພັນດອນ, ກຳມະການກົມການເມືອງສູນກາງພັກ, ນາຍົກລັດຖະມົນຕີແຫ່ງ ສປປ ລາວ ທີ່ເຄົາລົບ ແລະ ນັບຖືຢ່າງສູງ;

- ບັນດາທ່ານລັດຖະມົນຕີ, ຮອງລັດຖະມົນຕີ, ທ່ານເຈົ້າແຂວງ, ຮອງເຈົ້າແຂວງ, ທ່ານ ເຈົ້າເມືອງ, ຕາງໜ້າ ສະຖານທູດ ແລະ ຜູ້ ຕາງໜ້າອົງການຈັດຕັ້ງສາກົນປະຈຳ ສປປ ລາວ ທີ່ນັບຖື.

- ທ່ານ ຫວັງ ຈຽນຫົວ, ປະທານ ບໍລິສັດຊີ່ເຟິງ ຂຸດຄົ້ນຄຳ ຈຳກັດ

- ທ່ານ ກາວ ປົວ, ປະທ່ານ ບໍລິສັດ ລ້ານຊ້າງ ມິເນໂຣນສ໌ ຈຳກັດ

- ບັນດາທ່ານ, ແຂກທີ່ມີກຽດ, ທ່ານຍິງ-ທ່ານ ຊາຍ ທີ່ນັບຖື ແລະ ຮັກແພງ !

ໂດຍຕາງໜ້າຄະນະຄຸ້ມຄອງໂຄງການບໍ່ຄຳ-ທອງເຊໂປນ ບໍລິສັດລ້ານຊ້າງ ມິເນໂຣນສ໌ ຈຳກັດ ແລະ ໃນນາມສ່ວນຕົວ, ຂ້າພະເຈົ້າຖືເປັນກຽດຢ່າງສູງ ທີ່ໄດ້ຮັບອະນຸຍາດໃຫ້ຂຶ້ນມີຄຳເຫັນຕໍ່ພິທີສະເຫຼີມສະຫຼອງ 20 ປີ ຂອງການຂຸດຄົ້ນບໍ່ຄຳ-ທອງ ເຊໂປນ ໃນມື້ນີ້.

ໃນພິທີອັນຄຶກຄື້ນ ແລະ ມີຄວາມສຳຄັນ ໃນງານສະເຫຼີມສະຫຼອງ 20 ປີ ລ້ານຊ້າງ ມິເນໂຣນສ໌ ຈຳກັດ ໃນມື້ນີ້, ຄະນະຄຸ້ມຄອງໂຄງການບໍ່ຄຳ-ທອງເຊໂປນ, ບໍລິສັດລ້ານຊ້າງ ມິເນໂຣນສ໌ ຈຳກັດ ມີຄວາມພາກພູມໃຈເປັນຢ່າງຍິ່ງ ແລະ ຖືເປັນກຽດຢ່າງສູງ ທີ່ໄດ້ຂໍ່ານັບຮັບຕ້ອນ ທ່ານ ນາຍົກລັດຖະມົນຕີ ສອນໄຊ ສີພັນພອນ ພ້ອມດ້ວຍ ບັນດາທ່ານ ລັດຖະມົນຕີ, ຮອງລັດຖະມົນຕີ, ທ່ານເຈົ້າແຂວງ, ຮອງເຈົ້າແຂວງ, ທ່ານ ເຈົ້າເມືອງ, ບັນດາທ່ານທູຕານຸທູດ, ຜູ້ຕາງໜ້າອົງການຈັດຕັ້ງສາກົນປະຈຳ ສປປ ລາວ ແລະ ບັນດາທ່ານ, ແຂກທີ່ມີກຽດຈາກພາກສ່ວນຕ່າງໆ.

ພວກຂ້າພະເຈົ້າຕີລາຄາສູງ ແລະ ຖືວ່າ : ການເຂົ້າຮ່ວມຂອງທ່ານ ນາຍົກລັດຖະມົນຕີ ແລະ ບັນດາທ່ານ, ແຂກທີ່ມີກຽດ, ທ່ານຍິງ-ທ່ານຊາຍໃນພິທີທີ່ນີ້ ແມ່ນການໃຫ້ກຽດຢ່າງສູງ ທັງເປັນການປຸກລະດົມກຳລັງໃຈທີ່ສຳຄັນໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວດຳເນີນງານ ຂອງ ບໍລິສັດ ລ້ານຊ້າງມິເນໂຣນສ໌ ຈຳກັດ ຂອງພວກຂ້າພະເຈົ້າເປັນຢ່າງຍິ່ງ.

ບັນດາທ່ານ, ບັນດາແຂກຜູ້ມີກຽດ!

ດັ່ງທີ່ພວກເຮົາໄດ້ຮັບຮູ້ແລ້ວວ່າ: ກ່ອນໜ້ານີ້ 20 ປີ, ບົນພື້ນຖານການຈັດຕັ້ງຜັນຂະຫຍາຍແນວທາງປ່ຽນແປງໃໝ່ຂອງພັກ, ເປີດກວ້າງການເຊື່ອມໂຍງເສດຖະກິດພາກພື້ນ ແລະ ສາກົນນັ້ນ, ໂຄງການບໍ່ຄຳ-ທອງເຊໂປນ, ບໍລິສັດລ້ານຊ້າງ ມິເນໂຣນສ໌ ຈຳກັດ ຊຶ່ງແມ່ນໂຄງການຮ່ວມມືຂອງພາກລັດ ສປປ ລາວ ແລະ ພາກເອກະຊົນຕ່າງປະເທດແຫ່ງທຳອິດ ທີ່ໄດ້ເຂົ້າມາລົງທຶນໃນການພັດທະນາອຸດສາຫະກຳບໍ່ແຮ່ຢູ່ ສປປ ລາວ.

ພວກເຮົາມີຄວາມພາກພູມໃຈເປັນຢ່າງຍິ່ງທີ່ເຫັນວ່າ: ໃນຕະຫຼອດໄລຍະ 2 ທົດສະວັດ ທີ່ຜ່ານມາ ການດຳເນີນທຸລະກິດຂອງ ບໍລິສັດ ລ້ານຊ້າງ ມິເນໂຣນສ໌ ຈຳກັດ ແມ່ນໄດ້ດຳເນີນຢູ່ໃນທ່າມກາງສະພາບການທີ່ຫຍຸ້ງຍາກ ແລະ ໄດ້ຮັບຜົນກະທົບໃນດ້ານຕ່າງໆຊຶ່ງມີທັງຂໍ້ສະດວກ ແລະ ສິ່ງທ້າທາຍນາໆປະການ.

ແຕ່, ພາຍໃຕ້ການນຳພາ, ການສົ່ງເສີມ, ຊຸກຍູ້ ແລະ ສ້າງເງື່ອນໄຂເອື້ອອຳນວຍຂອງພັກ, ຂອງຄະນະພັກ, ລັດຖະບານ ແລະ ອົງການປົກຄອງທ້ອງຖິ່ນທຸກຂັ້ນ, ການຮ່ວມມືຊ່ວຍເຫຼືອຂອງບັນດາຂະ ແໜງການ ແລະ ປະຊາຊົນບັນດາເຜົ່າ. ດ້ວຍຄວາມຕັ້ງໜ້າ, ເປັນເຈົ້າການຂອງຄະນະຄຸ້ມຄອງ, ສະພາບໍລິຫານ, ຜູ້ບໍລິຫານ, ຄວາມບຸກບືນ, ສູ້ຊົນ, ເປັນເຈົ້າການຜ່ານຜ່າຄວາມຫຍຸ້ງຍາກຂອງພະນັກງານ, ນັກຊ່ຽວຊານ, ນັກວິຊາການ ແລະ ຖັນແຖວກຳມະກອນ,

ພິເສດ : ແມ່ນການສະໜັບສະໜູນ ແລະ ຄວາມເອົາໃຈໃສ່ຈາກລັດຖະບານ ທັງສອງປະເທດ ລາວ-ຈີນ, ນັກລົງທຶນຈາກຕ່າງປະເທດ...ອັນໄດ້ເຮັດໃຫ້ການດຳເນີນງານໃນທຸກໆດ້ານຂອງບໍລິສັດລ້ານຊ້າງ ມິເນໂຣນສ໌ ຈຳກັດ ສາມາດຍາດໄດ້ຜົນສຳເລັດທີ່ມີລັກສະນະຕໍ່ເນື່ອງ, ໜັກແໜ້ນ ແລະ ມີລັກສະນະຍືນຍົງ.

20 ປີທີ່ຜ່ານມາ, ບໍລິສັດລ້ານຊ້າງ ມິເນໂຣນສ໌ ຈຳກັດ ບໍ່ພຽງແຕ່ໄດ້ເຮັດລ້ອນບົດບາດ ແລະ ໜ້າທີ່ໃນການດຳເນີນການຜະລິດແຮ່ທອງ-ຄຳ ທີ່ມີຄວາມໜ້າເຊື່ອຖືສູງເພື່ອສົ່ງອອກເທົ່ານັ້ນ, ແຕ່ຍັງໄດ້ປະກອບສ່ວນເຂົ້າໃນການເພີ່ມລາຍຮັບຂອງລັດ, ເປັນຫົວໜ່ວຍທຸລະກິດສຳຄັນ ທີ່ນຳເອົາເງິນຕາຕ່າງປະເທດເຂົ້າມາໃນປະເທດເຮົາ. ຜົນງານທີ່ພົ້ນເດັ່ນ ແລະ ກາຍເປັນສັນຍາລັກຂອງຂະບວນວິວັດແຫ່ງການພັດທະນາ ແລະ ເຕີບໃຫຍ່ຂະຫຍາຍຕົວຂອງ ບໍ່ຄຳ-ທອງ ເຊໂປນ ໃນຕະຫຼອດໄລຍະເວລາ 20 ປີທີ່ຜ່ານມາ ບໍລິສັດ ລ້ານຊ້າງ ມິເນໂຣນສ໌ ຈຳກັດ ໄດ້ມີຄວາມເອົາໃຈໃສ່ ທີ່ສຳຄັນ ເພື່ອສົ່ງເສີມ ການພັດທະນາແບບຍືນຍົງ ແລະ ການຮັກສາສິ່ງແວດລ້ອມໃຫ້ໄດ້ຕາມມາດຕະຖານສາກົນ ໃນຂະແໜງອຸດສາຫະກຳບໍ່ແຮ່ ລວມທັງ ການຈັດຕັ້ງປະຕິບັດແຜນງານ ຕິດຕາມກວດກາສິ່ງແວດລ້ອມ ຢ່າງເຂັ້ມງວດ ແລະ ການລົງທຶນເຂົ້າໃນໂຄງການພັດທະນາຊຸມຊົນ.

ໂຄງການ ບໍ່ຄຳ-ທອງ ເຊໂປນ ມາຮອດມື້ນີ້ ໄດ້ກາຍເປັນຜູ້ຜະລິດທອງແດງ ແລະ ທອງຄຳລາຍໃຫຍ່ທີ່ສຸດໃນລາວ, ໄດ້ປະກອບສ່ວນສຳຄັນເຂົ້າໃນການພັດທະນາເສດຖະກິດຂອງປະເທດ. ນອກຈາກນັ້ນ, ໂຄງການຂຸດຄົ້ນບໍ່ຄຳ-ທອງ ເຊໂປນ ເປັນໂຄງການຕົວແບບດີເດັ່ນ ຂອງການຂຸດຄົ້ນບໍ່ແຮ່ ໃນການພັດທະນາຢ່າງມີຄວາມຮັບຜິດຊອບໃນອາຊີຕາເວັນອອກສຽງໃຕ້.

ບໍລິສັດ ລ້ານຊ້າງ ມິເນໂຣນສ໌ ຈຳກັດ ເປັນໜຶ່ງໃນຄວາມເປັນເລີດດ້ານຂຸດຄົ້ນບໍ່ແຮ່ ໃນ ສປປ ລາວ ທີ່ໄດ້ຮັບການຍ້ອງຍໍໃນຖານະເປັນວິສາຫະກິດກຽດຕິສັກ ໃນຂັ້ນ A+ ຈາກກະຊວງພະລັງງານ ແລະ ບໍ່ແຮ່ ດ້ານການປະກອບສ່ວນເຂົ້າໃນການພັດທະນາເສດຖະກິດສັງຄົມ, ວຽກງານສຸຂະພາບ, ຄວາມປອດໄພ, ການປົກປັກຮັກສາສິ່ງແວດລ້ອມ ແລະ ການຮັກສາໄດ້ຕາມມາດຕະຖານ ສາກົນ.



ບໍລິສັດ ລ້ານຊ້າງ ມິເນໂຣນສ໌ ຈຳກັດ ໄດ້ລົງທຶນປະມານ 34 ລ້ານ ໂດລາ ສະຫະລັດ ເພື່ອສ້າງຕາຂ່າຍໄຟຟ້າແຫ່ງຊາດ ຈາກເມືອງທ່າແຂກ ຫາເມືອງ ມະຫາໄຊ ໂດຍການຮ່ວມມືກັບ ລັດວິສາຫະກິດໄຟຟ້າລາວ ອັນໄດ້ຂະຫຍາຍໄປສູ່ການພັດທະນາເຂດຊົນນະບົດ ແລະ ທ່າງໄຫສອກຫຼີກ ແລະ ໄດ້ລົງທຶນ 20 ລ້ານ ໂດລາ ສະຫະລັດ ເພື່ອສ້າງ ແລະ ບຳລຸງຮັກສາທ້ອງຖິ່ນ. ໃນປັດຈຸບັນທຸກໆບ້ານຢູ່ເມືອງວິລະບູລີ ແມ່ນມີເສັ້ນທາງເຂົ້າເຖິງ. ນອກນັ້ນ, ບໍລິສັດຍັງໄດ້ລົງທຶນ 5 ລ້ານ ໂດລາ ສະຫະລັດ ໃຫ້ແກ່ແຂວງສະຫວັນນະເຂດ ເພື່ອປັບປຸງ-ຍົກລະດັບເສັ້ນທາງ 28 A, ໂດຍການປູຢາງສອງຊັ້ນ ມີຄວາມຍາວ 41,56 ກິໂລແມັດ ແຕ່ບ້ານນາບໍ່ ຫາ ເທດສະບານເມືອງວິລະບູລີ, ແຂວງສະຫວັນນະເຂດ ເຊິ່ງເປັນທີ່ຕັ້ງຂອງ ບໍ່ຄຳ-ທອງເຊໂປນ. ໂຄງການນີ້ຈະປັບປຸງການເຂົ້າເຖິງຕະຫຼາດ ໃຫ້ແກ່ປະຊາຊົນທ້ອງຖິ່ນ 4,000 ກວ່າຄົນ.

20 ປີທີ່ຜ່ານມາ, ບໍລິສັດ ລ້ານຊ້າງ ມິເນໂຣນສ໌ ຈຳກັດ ໄດ້ເຮັດຫຼ້ອນໜ້າທີ່ອັນສຳຄັນໃນການປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງ ສປປ ລາວ, ເປັນຕົ້ນແມ່ນການປະກອບສ່ວນເຂົ້າຮ່ວມໃນຂະບວນການພັດທະນາຊົນນະບົດ, ການແກ້ໄຂຄວາມທຸກຍາກ ຂອງປະຊາຊົນບັນດາເຜົ່າ, ແມ່ນການຕິດແໜ້ນກັບການພັດທະນາທ້ອງຖິ່ນ ແລະ ປັບປຸງຍົກສູງຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ ເປັນຕົ້ນແມ່ນຢູ່ໃນບໍລິເວນອ້ອມຂ້າງໂຄງການພັດທະນາ ບໍ່ຄຳ-ທອງ ເຊໂປນ.

ນັບຕັ້ງແຕ່ເລີ່ມດຳເນີນການງານໃນປີ 2003, ບໍລິສັດ ລ້ານຊ້າງ ມິເນໂຣນສ໌ ຈຳກັດ ໄດ້ປະກອບສ່ວນ 1,7 ຕື້ ໂດລາ ສະຫະລັດ ເປັນລາຍຮັບໂດຍກົງໃຫ້ແກ່ລັດຖະບານລາວ ຜ່ານການຈ່າຍພາສີອາກອນ, ຄ່າຊັບພະຍາກອນແຮ່ທາດ ແລະ ເງິນປັນຜົນ. ນອກຈາກນັ້ນ, ຍັງໄດ້ປະກອບສ່ວນຫຼາຍລ້ານ ໂດລາ ສະຫະລັດ ເປັນຜົນປະໂຫຍດທາງອ້ອມ ຜ່ານການສ້າງວຽກເຮັດງານທຳ, ການຝຶກອົບຮົມ, ການພັດທະນາຊຸມຊົນ ແລະ ການພັດທະນາທ້ອງຖິ່ນ ເຊິ່ງເປັນການປະກອບສ່ວນອັນມະຫາສານ ຕໍ່ການພັດທະນາເສດຖະກິດ ແລະ ສັງຄົມ ໃນ ສປປ ລາວ.

ພິເສດ, ນັບຕັ້ງແຕ່ເລີ່ມໂຄງການໃນປີ 2003 ເປັນຕົ້ນມາ. ນອກຈາກໂຄງການພັດທະນາທັກສະ ແລະ ຂີດຄວາມສາມາດໃຫ້ພະນັກງານຂອງຕົນແລ້ວ, ລ້ານຊ້າງ ມິເນໂຣນສ໌ ຈຳກັດ ຍັງໄດ້ໃຫ້ຄວາມສຳຄັນແກ່ຂະແໜງການສຶກສາ ແລະ ການຝຶກອົບຮົມວິຊາຊີບເພື່ອສົ່ງເສີມການພັດທະນາຊັບພະຍາ ກອນມະນຸດໃນ ສປປ ລາວ ໂດຍຜ່ານບັນດາໂຄງການຕ່າງໆ

ສະນັ້ນ, ຢູ່ໃນພິທີສະເຫຼີມສະຫຼອງອັນມີຄວາມໝາຍຄວາມສຳຄັນນີ້ ຂ້າພະເຈົ້າຂໍຕາງໜ້າໃຫ້ຄະນະຄຸ້ມຄອງໂຄງການ, ຂໍສະແດງຄວາມຍ້ອງຍໍສັນລະເສີນ, ຊົມເຊີຍຕໍ່ຜົນງານ, ໄຊຊະນະ ແລະ ການເຕີບໃຫຍ່ຂະຫຍາຍຕົວຂອງ ບໍລິສັດ ລ້ານຊ້າງ ມິເນໂຣນສ໌ ຈຳກັດ ມານະໂອກາດນີ້ຢ່າງສຸດອົກສຸດໃຈ ! (ຕົບມື)

ຂ້າພະເຈົ້າຂໍຕາງໜ້າໃຫ້ຄະນະຄຸ້ມຄອງ, ຄະນະບໍລິຫານງານ ຖັນແຖວພະນັກງານ, ນັກວິຊາການ ແລະ ຊາວກຳມະກອນຂອງບໍລິສັດ ລ້ານຊ້າງ ມິເນໂຣນສ໌ ຈຳກັດ, ຂ້າພະຈົ້າຂສະແດງຄວາມຮູ້ບຸນຄຸນຕໍ່ສູນກາງພັກ, ລັດຖະບານ, ອົງການຈັດຕັ້ງສາກົນ, ສະຖາບັນການເງິນທັງພາຍໃນ, ພາກພື້ນ, ສາກົນ; ຄະນະພັກ, ອົງການປົກຄອງທ້ອງຖິ່ນທຸກຂັ້ນ, ບັນດາຂະແໜງການ, ອົງການນັບທັງຢູ່ສູນກາງ ແລະ ທ້ອງຖິ່ນ, ທັງພາຍໃນ ແລະ ຕ່າງໆປະເທດທີ່ໄດ້ໃຫ້ການສະໜັບສະໜູນ, ຊ່ວຍເຫຼືອ ໃຫ້ການດຳເນີນງານຂອງ ບໍລິສັດ ລ້ານຊ້າງ ມິເນໂຣນສ໌ ຈຳກັດ ມີຜົນສຳເລັດເປັນຢ່າງດີຕະຫຼອດມາ.

ບັນດາທ່ານ ທີ່ນັບຖື ແລະ ຮັກແພງ!

ດ້ວຍການເປັນຜູ້ຜະລິດແຮ່ທາດທີ່ໜ້າເຊື່ອຖືມາຕະຫຼອດໄລຍະ 20 ປີທີ່ຜ່ານມາ, ບໍລິສັດ ລ້ານຊ້າງ ມິເນໂຣນສ໌ ຈຳກັດ ໄດ້ມີບົດບາດສຳຄັນໃນການພັດທະນາຕະຫຼາດອຸດສາຫະກຳແຮ່ທາດນັບ ທັງຢູ່ພາຍໃນ ແລະ ພາກພື້ນ ແລະ ບໍລິສັດ ຈະສືບຕໍ່ເປັນຜູ້ນຳໃນການຊອກຫາໂຄງການແຫ່ງໃໝ່ ເພື່ອຂະຫຍາຍກຳລັງການຜະລິດ ແລະ ເພື່ອຕອບສະໜອງໃຫ້ແກ່ຄວາມຕ້ອງການຊັບພະຍາກອນແຮ່ທາດທີ່ນັບມື້ເພີ່ມຂຶ້ນພາຍໃນປະເທດ ແລະ ປະເທດອ້ອມຂ້າງ ເພື່ອນຳເອົາຜົນປະໂຫຍດອັນໃຫຍ່ຫຼວງມາສູ່ປະເທດຊາດຂອງພວກເຮົາ.

ຂໍອວຍພອນໃຫ້ ທ່ານ ນາຍົກລັດຖະມົນຕີ ພ້ອມດ້ວຍ ບັນດາທ່ານ ລັດຖະມົນຕີ, ຮອງລັດຖະມົນຕີ, ທ່ານເຈົ້າແຂວງ, ຮອງເຈົ້າແຂວງ, ທ່ານເຈົ້າເມືອງ, ທ່ານທູຕານຸທູດ, ຄະນະປະທ່ານບໍລິສັດ, ຜູ້ຕາງໜ້າອົງການຈັດຕັ້ງສາກົນ ປະຈຳ ສປປ ລາວ ແລະ ບັນດາທ່ານ, ແຂກທີ່ມີກຽດຈາກພາກສ່ວນຕ່າງໆທີ່ມາຮ່ວມງານ ຈົ່ງປະສົບແຕ່ຄວາມຜາສຸກ ແລະ ປະສົບໂຊກດີ.

ຂໍສະແດງຄວາມຂອບໃຈຢ່າງສູງ







## LXML ເຊໂປນ ໄດ້ຮັບລາງວັນອັນຊົງກຽດ ດີເດັ່ນອາຊຽນ ດ້ານການຜະລິດແຮ່ທາດ-ໂລຫະ ປະຈຳປີ 2023

**ທັນວາ 2023** - ບໍລິສັດ ລ້ານຊ້າງ ມິເນໂຣນສ໌ ລິມິເຕັດ (ລຊມລ) ໄດ້ຮັບລາງວັນ "ດີເດັ່ນອາຊຽນ" ດ້ານການຜະລິດແຮ່ທາດ- ໂລຫະ ຂັ້ນຮອງອັນດັບໜຶ່ງ. ລາງວັນອັນຊົງກຽດດັ່ງກ່າວນີ້ຍ້ອງຍໍສັນລະເສີນຄວາມມຸ່ງໝັ້ນຂອງບໍລິສັດໃນການດຳເນີນການຂຸດຄົ້ນບໍ່ແຮ່ແບບຍືນຍົງ. ລາງວັນດັ່ງກ່າວນີ້ແມ່ນໄດ້ປະກາດໃນກອງປະຊຸມຄະນະກຳມະການຕັດສິນລາງວັນອາຊຽນດ້ານແຮ່ທາດປະຈຳອາຊຽນຄັ້ງທີ 3 ຈັດຂຶ້ນໃນວັນທີ 21-22-23 ພະຈິກ 2023 ທີ່ກຳປູເຈຍ.

ລາງວັນນີ້ ຍ້ອງຍໍສັນລະເສີນ ລຊມລ ໃນຖານະບໍລິສັດຜະລິດແຮ່ທາດທີ່ນຳໜ້າຢູ່ໃນ ສປປ ລາວ ທີ່ມີຜົນງານດີເດັ່ນ ສາມາດບັນລຸໄດ້ຕາມມາດຕະຖານໃນການພັດທະນາຊຸມຊົນ, ການປະກອບສ່ວນຕໍ່ການສະໜອງແຮ່ທາດໃນຕະຫຼາດອາຊຽນ, ການພັດທະນາຊັບພະຍາກອນມະນຸດ, ສັກກະຍະພາບ ແລະ ປະສິດທິພາບດ້ານຊັບພະຍາກອນ, ແລະ ການສ້າງມູນຄ່າເພີ່ມດ້ານຄວາມຍືນຍົງ. ນອກຈາກນັ້ນ, ຜົນງານດ້ານສຸຂະພາບ, ສິ່ງແວດລ້ອມ ແລະ ຄວາມປອດໄພຂອງ ລຊມລ ກໍຍັງໄດ້ຮັບການພິຈາລະນາ. ການປະຕິບັດງານ, ລະບົບ ກໍຄືຂະບວນການດຳເນີນງານທີ່ສ້າງສັນ-ເປັນນະວັດຕະກຳຂອງບໍລິສັດ ກໍໄດ້ເຮັດໃຫ້ບໍລິສັດມີເງື່ອນໄຂໄດ້ຮັບລາງວັນຄັ້ງນີ້.

ໃນຖານະບໍລິສັດບໍ່ແຮ່ທີ່ມີຄວາມຮັບຜິດຊອບຢູ່ໃນ ສປປ ລາວ, ລຊມລ ມີຄວາມມຸ່ງໝັ້ນປະຕິບັດຕາມ ພາກປະຕິບັດທີ່ດີທີ່ສຸດໃນການຄຸ້ມຄອງສິ່ງແວດລ້ອມ ແລະ ການພັດທະນາເສດຖະກິດ-ສັງຄົມຢ່າງຍືນຍົງ. ລາງວັນອາຊຽນດ້ານແຮ່ທາດຄັ້ງນີ້ ເປັນການຢັ້ງຢືນວ່າ ບໍລິສັດພວກເຮົາເປັນຕົ້ນແບບດ້ານການຂຸດຄົ້ນບໍ່ແຮ່, ສົ່ງເສີມການພັດທະນາແຮ່ທາດທີ່ມີຄວາມຍືນຍົງດ້ານສິ່ງແວດລ້ອມ ແລະ ສັງຄົມ, ການເຜີຍແຜ່ພາກປະຕິບັດທີ່ດີທີ່ສຸດ ແລະ ສົ່ງເສີມໃຫ້ພາກເອກະຊົນເຂົ້າຮ່ວມໃນການຄຸ້ມຄອງສິ່ງແວດລ້ອມຢ່າງມີມາດຕະຖານ ຄຽງຄູ່ກັບການປະກອບສ່ວນຕໍ່ການພັດທະນາຊຸມຊົນ ແລະ ການພົວພັນກັບຜູ້ມີສ່ວນຮ່ວມທີ່ກ່ຽວຂ້ອງ.

ການເຂົ້າຮ່ວມການແຂ່ງຂັນຂອງ ລຊມລ ແມ່ນນຳພາໂດຍ ທ່ານ ສະໝານ ອະເນກາ, ຜູ້ອຳນວຍການໃຫຍ່ ລຊມລ ພ້ອມດ້ວຍຄະນະຄື: ທ່ານ ຈັນທອນ ເນົາວະລາດ, ຮອງອຳນວຍການ; ທ່ານ ເດວິ ໄດເຊິນ, ຫົວໜ້າສາຍງານອາວຸໂສດ້ານການຜະລິດ; ທ່ານ ກາເຕຍ ຈີວາໄຊກີ, ຫົວໜ້າສາຍງານດ້ານສື່ສານ ແລະ ປະຊາສຳພັນ ພ້ອມທັງການນຳສະເໜີຕໍ່ຄະນະກຳມະການຕັດສິນໂດຍ ທ່ານ ແຈເຣິມີ ເດວິດຊັນ, ຮອງຜູ້ຈັດການໃຫຍ່-ຝ່າຍດຳເນີນການຂຸດຄົ້ນບໍ່ແຮ່ ແລະ ຄວາມປອດໄພຂອງ ລຊມລ ເຊິ່ງໄດ້ ສະແດງໃຫ້ຄະນະກຳມະການເຫັນພາກປະຕິບັດທີ່ດີທີ່ສຸດຂອງບໍລິສັດໃນການຜະລິດແຮ່ທາດ ໃນລະດັບອາຊຽນ.



ລາງວັນນີ້ເປັນໂອກາດທີ່ດີເລີດເພື່ອໃຫ້ ລຊມລ ໄດ້ນຳຊື່ສຽງຂອງຕົນສູ່ລະດັບສາກົນ ແລະ ຮັດແໜ້ນການຮ່ວມມືລະດັບພາກພື້ນ ຄຽງຄູ່ກັບການສົ່ງເສີມໃຫ້ພາກເອກະຊົນ ຖືເປັນບູລິມະສິດຕົ້ນຕໍ ຄວາມປອດໄພ, ການຄຸ້ມຄອງສິ່ງແວດລ້ອມ ແລະ ການພັດທະນາຊຸມຊົນຢ່າງຍືນຍົງ ທີ່ດີທີ່ສຸດ. ຜົນສຳເລັດຄັ້ງນີ້ ເປັນການຢັ້ງຢືນຂອງບໍລິສັດກ່ຽວກັບ ການຄຸ້ມຄອງສິ່ງແວດລ້ອມ ແລະ ຄວາມໝາຍໝັ້ນໃນການປະຕິບັດຕາມມາດຕະຖານສາກົນດ້ານການພັດທະນາແຮ່ທາດຢ່າງຍືນຍົງ.

ລຊມລ ຖືເປັນກຽດ ແລະ ມີຄວາມພາກພູມໃຈໃນຜົນສຳເລັດ ໃນການຮັບລາງວັນອາຊຽນດີເດັ່ນດ້ານແຮ່ທາດຄັ້ງນີ້ ແລະ ບໍລິສັດຈະສືບຕໍ່ປະກອບສ່ວນຕໍ່ ການພັດທະນາທີ່ຍືນຍົງຂອງ ສປປ ລາວ ໃນປັດຈຸບັນ ແລະ ອະນາຄົດ. ລຊມລ ຈະສືບຕໍ່ເລັ່ງເປັນບໍລິສັດທີ່ດີເດັ່ນໃນອຸດສາຫະກຳບໍ່ແຮ່ ພ້ອມທັງຮັກສາຄວາມໝາຍໝັ້ນຕໍ່ ຄວາມຍືນຍົງດ້ານສິ່ງແວດລ້ອມ ແລະ ການພັດທະນາຊຸມຊົນ.




# LXML ເຊໂປນ ປະກອບສ່ວນຊຸກຍູ້ງານສະເຫຼີມສະຫຼອງ ເມືອງວິລະບູລີ ຄົບຮອບ 30 ປີ

ໃນມື້ວັນທີ 23 ທັນວາ 20213, ບໍລິສັດ ລ້ານຊ້າງ ມິເນໂຣນສ໌ ຈຳກັດ (ລຊມລ) ໃນນາມທີ່ເປັນບໍລິສັດແຮ່ທາດຊັ້ນນຳໃນລາວ ໄດ້ປະກອບສ່ວນເງິນຈຳນວນ 150,000,000 ກີບ (US$ 7,282.76) ເພື່ອຊຸກຍູ້ ເມືອງວິລະບູລີ ຈັດງານສະເຫຼີມສະຫຼອງໃຫຍ່ ວັນສ້າງຕັ້ງເມືອງວິລະບູລີ ຄົບຮອບ 30 ປີ. ນອກຈາກນີ້, ບໍລິສັດ ຍັງໄດ້ສະໜອງຊຸດເຄື່ອງປັ່ນໄຟຟ້າ ຂະໜາດ 200KVA/180KW ແລະ ອຸປະກອນໄຟຟ້າທີ່ກ່ຽວຂ້ອງອື່ນໆເພື່ອສະໜັບສະໜູນໃນງານ ເປັນເວລາ 2 ວັນ. ພິທີດັ່ງກ່າວໄດ້ຈັດຂຶ້ນທີ່ສະໜາມກິລາໃຫຍ່ ລາດຊະວົງ ເມືອງວິລະບູລີ ແຂວງສະຫວັນນະເຂດ.

ນອກຈາກເງິນສະໜັບສະໜູນດັ່ງກ່າວແລ້ວ ບໍລິສັດຍັງໄດ້ຊ່ວຍກະກຽມຄວາມພ້ອມດ້ານຕ່າງໆ ເປັນຕົ້ນແມ່ນ ພື້ນຖານໂຄງລ່າງ, ເສັ້ນທາງ ແລະ ໂຮງຮຽນ ໃນນັ້ນລວມມີ ໂຄງການຍົກລະດັບເສັ້ນທາງ B1 ໃນຕົວເມືອງ (ປັດຈຸບັນໃສ່ຊື່ຖະໜົນໄກສອນພົມວິຫານ) ລວມມູນຄ່າ 3,134,714,000 ກີບ (US$ 33,955.17), ກໍ່ສ້າງ ແລະ ສ້ອມແປງໂຮງຮຽນປະຖົມສົມບູນ ຜາດ່າງ, ບ້ານແກ້ງເກິກ ເມືອງວິລະບູລີ ແຂວງສະຫວັນນະເຂດ ລວມເປັນມູນຄ່າທັງໝົດ 699,361,000 ກີບ, ບໍລິສັດຍັງໄດ້ຊ່ວຍເຫຼືອສະໜອງອຸປະກອນກໍ່ສ້າງວິດຖ່າຍໃນເຂດບ້ານອ້ອມຂ້າງບໍ່ຄຳ-ທອງເຊໂປນ ຄື: ບ້ານ ປະດົງ, ບ້ານ ນ້ຳຄຶບ, ບ້ານ ວັງຍາງ, ບ້ານ ແກ້ງເກິກ ແລະ ບ້ານ ນາກະຊິນ ລວມທັງໝົດ 85 ຄອບຄົວ ລວມມູນຄ່າທັງໝົດ 124,440,000 ກີບ ທັງນີ້ກໍ່ເພື່ອກະກຽມຄວາມພ້ອມຢ່າງຮອບດ້ານເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ເມືອງວິລະບູລີ.

ງານສະເຫລີມສະຫລອງວັນສ້າງຕັ້ງເມືອງວິລະບູລີ ຄົບຮອບ 30 ປີ ໂດຍການເປັນປະທານຂອງ ພະນະທ່ານ ບຸນໂຈມ ອຸບົນປະເສີດ, ເຈົ້າແຂວງສະຫວັນນະເຂດ ຮ່ວມກັບ ທ່ານ ວາລິຍະ ສີຈັນທອງທິບ, ເຈົ້າເມືອງ ວິລະບູລີ, ມີຜູ້ເຂົ້າຮ່ວມຈາກການນຳລັດຫຼາຍພາກສ່ວນເຂົ້າຮ່ວມ, ມີບັນດາເຈົ້າເມືອງໆເຊໂປນ, ເຈົ້າເມືອງບົວລະພາ ພ້ອມດ້ວຍບັນດາພະນັກງານອາວຸໂສເມືອງ ແລະ ແຂວງ ຕ່າງໆ ທີ່ກ່ຽວຂ້ອງເຂົ້າຮ່ວມ.

ການສະເຫຼີມສະຫຼອງ ເມືອງວິລະບູລີ ຄົບຮອບ 30 ຖືເປັນຂີດໝາຍທີ່ສຳຄັນອັນໜຶ່ງ ເພື່ອເປັນນິມິດໝາຍຂອງການດຳເນີນງານ ໂຄງການບໍ່ຄຳ-ທອງ ເຊໂປນຄົບຮອບ 20 ປີ, ສະແດງໃຫ້ເຫັນຄວາມມຸ່ງໝັ້ນຂອງ ລຊມລ ໃນການສະໜັບສະໜູນພື້ນຖານໂຄງລ່າງ ແລະ ຄວາມຜາສຸກຂອງຊຸມຊົນໃນພາກພື້ນ. ນີ້ຖືເປັນບາດກ້າວອັນຕັ້ງໜ້າໃນການປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງແຂວງສະຫວັນນະເຂດ.

ໃນໂອກາດກ່າວຄຳປາໄສ, ທ່ານ ວະລິຍະ ສີຈັນທອງທິບ, ເຈົ້າເມືອງວິລະບູລີ ໄດ້ສະແດງຄວາມຮັບຮູ້, ຕີລາຄາສູງ ແລະ ທັດສະນະທີ່ດີຕໍ່ ລຊມລ ໃນການປະກອບສ່ວນອັນສຳຄັນເຂົ້າໃນການພັດທະນາເສດຖະກິດສັງຄົມຂອງເມືອງວິລະບູລີ ໃຫ້ມີຊື່ສຽງດີທີ່ສຸດໃນຫຼາຍປີຜ່ານມານີ້. ທ່ານເຈົ້າເມືອງ ໄດ້ຕີລາຄາສູງການປະກອບສ່ວນອັນໃຫຍ່ຫຼວງຈາກ ລຊມລ ໃນການສະໜອງໂອກາດອັນດີໃຫ້ແກ່ການຈ້າງງານຂອງປະຊາຊົນທ້ອງຖິ່ນ, ສົ່ງເສີມນັກທຸລະກິດ ແລະ ຜູ້ຮັບເໝົາໃນທ້ອງຖິ່ນ ແລະ ໂຄງການກໍ່ສ້າງພື້ນຖານໂຄງລ່າງຕ່າງໆ ລວມທັງການກໍ່ສ້າງ ແລະ ຍົກລະດັບເສັ້ນທາງຫຼາຍສາຍ, ໂຮງຮຽນ, ໄຟຟ້າ, ເຄືອຄ່າຍຊຸມຊົນທີ່ເປັນເຈົ້າພາບ, ສຸກສາລາບ້ານ, ລະບົບນ້ຳປະປາຂອງເມືອງ, ລະບົບຊົນລະປະທານຂະໜາດນ້ອຍ, ເນື້ອທີ່ນາປູກຝັງແບບຍືນຍົງໃຫ້ບັນດາຄອບຄົວທຸກຍາກ, ສາມາດປັບປຸງຊີວິດການເປັນຢູ່ຂອງຊາວບ້ານໃນລະດັບທີ່ຍອມຮັບໄດ້ເປັນຢ່າງດີ, ສ້າງຄວາມເຂັ້ມແຂງໃຫ້ແກ່ຊາວບ້ານໃນການພັດທະນາບູລິມະສິດຂອງເຂົາເຈົ້າ ແລະ ສະໜອງຜົນປະໂຫຍດຫຼາຍຢ່າງໃຫ້ແກ່ຜູ້ທີ່ອາໃສຢູ່ໃນບໍລິເວນອ້ອມຮອບບໍ່ຄຳເຊໂປນ.

ລຊມລ ມີສາຍພົວພັນຮ່ວມມືອັນໜັກແໜ້ນກັບເມືອງວິລະບູລີ ມາເປັນເວລາຍາວນານ, ຊຶ່ງສະແດງໃຫ້ເຫັນເຖິງສາຍພົວພັນອັນດີງາມ ແລະ ຄວາມມຸ່ງໝັ້ນທີ່ມີຕໍ່ຊຸມຊົນທ້ອງຖິ່ນ ແລະ ຄວາມເອົາໃຈໃສ່ເບິ່ງແຍງສິ່ງແວດລ້ອມ. ເນື່ອງຈາກໂຄງການຂຸດຄົ້ນບໍ່ແຮ່ບໍ່ຄຳ-ທອງ ເຊໂປນ ຕັ້ງຢູ່ເມືອງວິລະບູລີ, ແຂວງ ສະຫວັນນະເຂດ, ບໍລິສັດໄດ້ ເອົາໃຈໃສ່ຕໍ່ສຸຂະພາບ ແລະ ຊີວິດການເປັນຢູ່ຂອງຊຸມຊົນທ້ອງຖິ່ນ ແລະ ຖືເອົາການຄຸ້ມຄອງສິ່ງແວດລ້ອມທີ່ດີ ເປັນບຸລິມະສິດສຳຄັນ. ຕະຫຼອດໄລຍະສອງທົດສະວັດທີ່ຜ່ານມາ, ບໍລິສັດ ລຊມລ ໄດ້ເຮັດວຽກຢ່າງມີຄວາມຮັບຜິດຊອບເພື່ອປັບປຸງຊີວິດການເປັນຢູ່ຂອງຊຸມຊົນທ້ອງຖິ່ນ, ສ້າງຄວາມເຂັ້ມແຂງໃຫ້ແກ່ຊາວບ້ານເພື່ອໃຫ້ເຂົາເຈົ້າໄດ້ບັນລຸ ບູລິມະສິດໃນການພັດທະນາເສດຖະກິດຄອບຄົວຂອງຕົນ ແລະ ສະໜອງຜົນປະໂຫຍດຫຼາຍຢ່າງໃຫ້ແກ່ບັນດາຊຸມຊົນທີ່ອາໃສຢູ່ໃນບໍລິເວນອ້ອມຮອບບໍ່ຄຳເຊໂປນ.

ໂດຍການຮ່ວມມືທີ່ດີກັບລັດຖະບານລາວ ແລະ ຊຸມຊົນທ້ອງຖິ່ນ ຢ່າງສະເໝີມາ ຜົນງານເຫຼົ່ານີ້ ໄດ້ເປັນສິ່ງຂັບເຄື່ອນໃຫ້ ເມືອງວິລະບູລີ ໃຫ້ຫລຸດພົ້ນຈາກສະຖານະ ເມືອງທີ່ທຸກຍາກທີ່ສຸດໄດ້ ໃນປີ 2015. ລາຍໄດ້ຕໍ່ຫົວຄົນຂອງປະຊາຊົນທ້ອງຖິ່ນ ເມືອງວິລະບູລີ ບັນລຸໄດ້ US$900ຄົນ/ປີ ເຊິ່ງ ເປັນການເພີ່ມຂຶ້ນ 50% ຕັ້ງແຕ່ປີ 2004. ໂຄງການພັດທະນາຊຸມຊົນຂອງ ລຊມລ ແມ່ນແນໃສ່ຮັກສາຊີວິດການເປັນຢູ່ທີ່ໝັ້ນ ຄົງ ແລະ ຍືນຍົງ ໂດຍການຮ່ວມມືກັບຊຸມຊົນທ້ອງຖິ່ນ ເຊິ່ງຈະເປັນການປູພື້ນຖານ ອັນສຳຄັນ ເພື່ອບັນລຸເສດຖະກິດທີ່ເຂັ້ມແຂງ.






# LXML ເຊໂປນ ຍ້ອງຍໍພະນັກງານ 192 ຄົນ ທີ່ເຮັດວຽກຍາວນານກັບບໍລິສັດ

ບໍລິສັດ ລ້ານຊ້າງ ມິເນໂຣນສ໌ ຈຳກັດ (ລຊມລ) ບໍ່ຄຳ-ທອງເຊໂປນ ໄດ້ມອບລາງວັນຍ້ອງຍໍພະນັກງານ 192 ຄົນທີ່ໄດ້ເຮັດວຽກກັບບໍລິສັດມາໄດ້ຍາວນານແຕ່ 5 ເຖິງ 30 ປີ. ໃນນັ້ນ ມີພະນັກງານ 49 ຄົນທີ່ເຮັດວຽກກັບ ລຊມລ ມາໄດ້ 5 ປີ, 49 ຄົນ 10 ປີ, 69 ຄົນ 15 ປີ, 24 ຄົນ 20 ປີ ແລະ 1 ຄົນ 30 ປີ.

ເມື່ອບໍ່ດົນມານີ້, ລຊມລ ໄດ້ສະເຫຼີມສະຫຼອງ 20 ປີແຫ່ງການດຳເນີນການຂຸດຄົ້ນ-ຜະລິດແຮ່ທາດ, ຕະຫຼອດອາຍຸການຂອງບໍ່ຄຳ-ທອງ ເຊໂປນ, ມີພະນັກງານຫຼາຍກວ່າ 10.000 ຄົນທີ່ໄດ້ປະກອບສ່ວນຕໍ່ການເຕີບໂຕຂອງ ລຊມລ, ຊຶ່ງເຮັດໃຫ້ເຂົາເຈົ້າໄດ້ຮຽນຮູ້, ຝຶກຝົນທັກສະວິຊາຊີບ ແລະ ສ້າງຊີວິດການເປັນຢູ່ທີ່ດີຂຶ້ນ.

ໃນຈຳນວນພະນັກງານ ແລະ ຜູ້ຮັບເໝົາທັງໝົດຫຼາຍກວ່າ 5.000 ຄົນ, 95% ແມ່ນຄົນລາວ, 63% ແມ່ນຄົນທ້ອງຖິ່ນ ແລະ 25% ແມ່ນແມ່ຍິງ. ໃນສອງທົດສະຫວັດຜ່ານມາ, ລຊມລ ໄດ້ລົງທຶນຫຼາຍລ້ານໂດລາສະຫະລັດ ເຂົ້າໃນການພັດທະນາຊັບພະຍາກອນມະນຸດ ລວມທັງ ທຶນການສຶກສາ, ການລົງຝຶກງານກັບບໍລິສັດ ແລະ ການຝຶກອົບຮົມຕົວຈິງ. ລຊມລ ສືບຕໍ່ສະໜັບສະໜູນຄວາມກ້າວໜ້າໃນອາຊີບການງານ ແລະ ຄວາມມຸ່ງໝັ້ນຂອງພະນັກງານເພື່ອສ້າງນັກວິຊາການຄົນລາວໃຫ້ເປັນມືອາຊີບ ແລະ ເພື່ອຜົນປະໂຫຍດຂອງ ສປປ ລາວ ໂດຍກົງ.

ໃນເດືອນສິງຫາ 2022, ລຊມລ ໄດ້ເຊັນບົດບັນທຶກຄວາມເຂົ້າໃຈກັບວິທະຍາໄລເຕັກນິກລາວ-ເຢຍລະມັນ ເພື່ອສະໜອງທຶນການຝຶກອົບຮົມນັກສຶກສາຊ່າງສີມືໃຫ້ແກ່ຊຸມຊົນອ້ອມຂ້າງ ບໍ່ຄຳ-ທອງ ເຊໂປນ ໃນເມືອງວິລະບູລີ. ນັກສຶກສາຈາກແຜນງານຝຶກອົບຮົມຊ່າງສີມືທີ່ຖືກຄັດເລືອກ ແມ່ນໄດ້ຮັບການຝຶກອົບຮົມວິຊາຊີບໃນຂະແໜງການ ເຕັກໂນໂລຊີລົດຍົນ, ໄຟຟ້າເອເລັກໂຕຣນິກ, ກົນຈັກໂຮງງານ, ກົນຈັກໜັກ ແລະ ໂລຫະກຳວິທະຍາ. ພາຍຫຼັງສຳເລັດຫຼັກສູດການຝຶກອົບຮົມ, ນັກສຶກສາດັ່ງກ່າວກໍຈະມີໂອກາດໄດ້ເຂົ້າມາເຮັດວຽກກັບບໍລິສັດ. ແຜນງານນີ້ແມ່ນຈະຈັດຕັ້ງປະຕິບັດໄປຈົນເຖິງປີ 2027.

ນັບຕັ້ງແຕ່ເລີ່ມດຳເນີນງານໃນປີ 2003, LXML ໄດ້ລົງທຶນຫຼາຍລ້ານໂດລາສະຫະລັດ ໃສ່ການຝຶກອົບຮົມ, ໃຫ້ທຶນການສຶກສາ, ແຜນງານຝຶກອົບຮົມຊ່າງສີມືແຮງງານ, ນັກຮຽນ ແລະ ນັກສຶກສາຝຶກງານ. ມີນັກສຶກສາຫຼາຍກວ່າ 105 ຄົນ ທີ່ໄດ້ສຳເລັດຫຼັກສູດການຝຶກອົບຮົມນັກສຶກສາຊ່າງສີມື ແລະ 36 ຄົນ ສຳເລັດການສຶກຊັ້ນສູງຈາກຕ່າງປະເທດ ເຊິ່ງເປັນທຶນທີ່ບໍລິສັດສະໜັບສະໜູນ.

ມາຮອດປັດຈຸບັນ, ລຊມລ ໄດ້ສະໜອງງົບປະມານ ແລະ ເວລາການຝຶກອົບຮົມຫຼາຍກວ່າ 23,000 ຊົ່ວໂມງໃຫ້ແກ່ພະນັກງານຄົນລາວ ໂດຍຜ່ານການຝຶກອົບຮົມທັງພາຍໃນ ແລະ ພາຍນອກ, ໃນສະຖານທີ່ເຮັດວຽກ ແລະ ໄປສຶກສາຢູ່ຕ່າງປະເທດ. ໃນເຄິ່ງປີທີ່ສອງຂອງ ປີ 2022 ລຊມລ ໄດ້ຟື້ນຟູບັນດາໂຄງການພັດທະນາຜູ້ຄຸມງານ ແລະ ທັກສະຄວາມເປັນຜູ້ນຳທີ່ສຳຄັນ ເພື່ອສະໜັບສະໜູນຄວາມເປັນມືອາຊີບໃຫ້ແກ່ນັກວິຊາການດ້ານບໍ່ແຮ່ຂອງລາວທີ່ເປັນລຸ້ນສືບທອດ.

ນັບຕັ້ງແຕ່ເລີ່ມການດຳເນີນງານໃນປີ 2003 ເປັນຕົ້ນມາ, ບໍ່ຄຳທອງ-ເຊໂປນ ໄດ້ປະກອບສ່ວນ ສ້າງລາຍຮັບໂດຍກົງຈາກພາສີ, ຄ່າພາກຫຼວງ ແລະ ເງິນປັນຜົນໃຫ້ແກ່ລັດຖະບານລາວຫຼາຍກວ່າ 1,7 ຕື້ໂດລາສະຫະລັດ. ນອກນີ້, ຍັງໄດ້ສະໜອງຜົນປະໂຫຍດທາງອ້ອມທີ່ສຳຄັນໂດຍຜ່ານການຈ້າງງານ, ສ້າງວຽກເຮັດງານທຳໃຫ້ຊຸມຊົນທ້ອງຖິ່ນຫຼາຍກວ່າ 5,000 ຄົນ.











# ສະເຫຼີມສະຫຼອງວັນຊາດທີ 2 ທັນວາ ຄົບຮອບ 48 ປີ ທີ່ພາກສະໜາມ ບໍ່ຄຳທອງ-ເຊໂປນ



ພະຈິກ 2023 ຜ່ານມານີ້ ບໍລິສັດ ລ້ານຊ້າງ ມິເນໂຣນສ໌ ຈຳກັດ (ລຊມລ) ໄດ້ຈັດການສະເຫຼີມສະຫຼອງ ວັນຊາດທີ 2 ທັນວາ ຄົບຮອບ 48 ປີ ຢູ່ທີ່ ບໍ່ຄຳ-ທອງເຊໂປນ, ເມືອງວິລະບູລີ ແຂວງສະຫວັນນະເຂດ. ເຂົ້າຮ່ວມງານດັ່ງກ່າວໂດຍຕາງໜ້າຈາກພາກລັດຖະບານ ກໍ່ຄືການນຳເມືອງວິລະບູລີ ໂດຍການໃຫ້ກຽດເຂົ້າຮ່ວມເປັນແຂກກິຕິມະສັກຂອງທ່ານ ວາລີຍະ ສີຈັນທອງທິບ, ເຈົ້າເມືອງວິລະບູລີ ພ້ອມດ້ວຍຄະນະ.

ງານສະເຫລີມສະຫລອງອັນມີຄຸນຄ່ານີ້ເປັນກຽດຈັດຂຶ້ນໂດຍ ທ່ານ ກາວ ປົວ ປະທານບໍລິສັດ ລຊມລ, ທ່ານ ໂຈ ຊິນປົງ, ຮອງປະທ່ານ ລຊມລ, ທ່ານ ສະໝານ ອະເນກາ, ຜູ້ອຳນວຍການໃຫຍ່ ລຊມລ, ທ່ານ ຄາລ ເບເກີ ດູລີ, ຜູ້ອຳນວຍການຝ່າຍປະຕິບັດການສາກົນຂອງ ບໍລິສັດ ຊີເຟິງຄຳ ແລະ ຮອງປະທານ ແລະ CEO ຂອງ Caystar Holdings, ພ້ອມດ້ວຍ ພະນັກງານທັງໝົດລວມທັງຜູ້ຮັບເໝົາ ແລະ ທີ່ປຶກສາຂອງ ບໍລິສັດ. ການສະເຫຼີມສະຫຼອງຄັ້ງນີ້ ມີຈຸດປະສົງແນ່ໃສ່ການສະເຫຼີມສະຫຼອງວັນສະຖາປະນາຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຄົບຮອບ 48 ປີ, ເພື່ອເໜັ້ນໃຫ້ເຫັນເຖິງຄວາມອຸດົມສົມບູນຂອງມໍລະດົກທາງວັດທະນະທຳຂອງປະເທດຊາດ.

ການສະເຫລີມສະຫລອງວັນຊາດລາວທີ່ ບໍ່ຄຳ-ທອງເຊໂປນ ປີນີ້ເປັນການຢັ້ງຢືນເຖິງຄວາມມຸ່ງໝັ້ນຂອງບໍລິສັດທີ່ມີຕໍ່ປະຊາຊົນລາວ ແລະ ການປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງປະເທດ. ການສະເຫຼີມສະຫຼອງດັ່ງກ່າວໄດ້ສະແດງໃຫ້ເຫັນເຖິງການອຸທິດຕົນຂອງບໍລິສັດໃນການປົກປັກຮັກສາສິ່ງແວດລ້ອມ ແລະ ການພັດທະນາຊຸມຊົນແບບຍືນຍົງ.






ທ່ານ ກາວ ປົວ ປະທານບໍລິສັດ ລຊມລ ໄດ້ກ່າວວ່າ “ພວກເຮົາມີຄວາມພູມໃຈທີ່ໄດ້ສະເຫຼີມສະຫຼອງວັນຊາດທີ 2 ທັນວາ ກັບພະນັກງານ ແລະ ຊຸມຊົນທີ່ພວກເຮົາຮັບໃຊ້, ງານສະເຫລີມສະຫລອງວັນຊາດລາວຢູ່ ບໍ່ຄຳ-ທອງເຊໂປນ ເປັນການສະແດງເຖິງການອະນຸລັກວັດທະນະທຳອັນດີງາມຂອງເຊື້ອຊາດລາວ, ອາຫານພື້ນເມືອງລາວ ແລະ ຍິ່ງໄປກວ່ານັ້ນກໍ່ຍັງເປັນການສະແດງເຖິງການປະດິດສ້າງ, ເຕັກໂນໂລຊີ ແລະ ການລິເລີ່ມສ້າງຄວາມຍືນຍົງຢ່າງຕັ້ງໜ້າຂອງບໍລິສັດ.” ໃນໂອກາດດັ່ງກ່າວທ່ານຍັງໄດ້ຍົກໃຫ້ເຫັນເຖິງການປະກອບສ່ວນຂອງບໍລິສັດຕໍ່ປະຊາຊົນ ແລະ ຊຸມຊົນທ້ອງຖິ່ນ, ລວມທັງການສະໜັບສະໜູນດ້ານການສຶກສາ, ສາທາລະນະສຸກ, ການພັດທະນາພື້ນຖານໂຄງລ່າງ ແລະ ຊີວິດການເປັນຢູ່ຂອງປະຊົນ.

“ບໍລິສັດພວກເຮົາເຊື່ອໝັ້ນວ່າຄວາມສຳ ເລັດທີ່ພວກເຮົາຍາດມາໄດ້ແມ່ນຕິດພັນກັບຄວາມສຳເລັດຂອງຊຸມຊົນທີ່ພວກເຮົາພວມດຳເນີນງານຢູ່. ພວກເຮົາມີຄວາມມຸ່ງຫມັ້ນທີ່ຈະລົງທຶນໃນເສດຖະກິດທ້ອງຖິ່ນແລະ ສ້າງໂອກາດທີ່ມີຄວາມຫມາຍສຳລັບປະຊາຊົນລາວ”, ກ່າວໂດຍ ທ່ານ ສະໝານ ອະເນກາ, ຜູ້ອຳນວຍການບໍລິສັດ ລຊມລ.

ການສະເຫລີມສະຫລອງວັນສະຖາປະນາຂອງ ສປປ ລາວ ຄົບຮອບ 48 ປີ ໃນປີນີ້ໄດ້ສ້າງໂອກາດແລະຄວາມເບີກບານມ່ວນຊື່ນທີ່ສະທ້ອນໃຫ້ເຫັນເຖິງຈິດໃຈຂອງຄວາມສາມັກຄີ, ຄວາມຫຼາກຫຼາຍ ແລະຄວາມກ້າວໜ້າ ຊຶ່ງເປັນໂອກາດເພື່ອສະເຫຼີມສະຫຼອງຜົນສຳເລັດຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ສານຕໍ່ຄວາມມຸ້ງໝັ້ນຂອງພວກເຮົາໃນການສ້າງອະນາຄົດທີ່ສົດໃສກວ່າເກົ່າ.



# LXML ເຊໂປນ ສະໜັບສະໜູນ ກວ່າ 3 ຕື້ ກີບ ເພື່ອຍົກລະດັບເສັ້ນທາງຢູ່ເມືອງວິລະບູລີ

**ທັນວາ 2023,** ໄດ້ມີພິທີມອບ-ຮັບໂຄງການເສັ້ນທາງໄກສອນພົມວິຫານ ຊຶ່ງໄດ້ຈັດຂຶ້ນຢູ່ທີ່ເມືອງວິລະບູລີ, ແຂວງສະຫວັນນະເຂດ. ໂຄງການດັ່ງກ່າວແມ່ນ ແມ່ໃສ່ປັບປຸງເສັ້ນທາງ B1 ເລີ່ມຈາກອານຸສາວະລີ ປະທານ ໄກສອນ ພົມວິຫານ ຫາສີ່ແຍກ, ທາງເສັ້ນນີ້ແມ່ນຢູ່ຕໍ່ໜ້າຫ້ອງວ່າການປົກຄອງເມືອງວິລະບູລີ ໄດ້ປັບປຸງ-ກໍ່ສ້າງສຳເລັດ ແລະ ປ່ຽນຊື່ມາເປັນ ຖະໜົນໄກສອນພົມວິຫານ, ເສັ້ນທາງດັ່ງກ່າວມີຄວາມຍາວ 382 ແມັດ, ກວ້າງ 7 ແມັດ, ໂຄງການດັ່ງກ່າວ ແມ່ນຮັບເໝົາກໍ່ສ້າງໂດຍ ບໍລິສັດ ລາວມຸງຄຸນ ກໍ່ສ້າງຂົວ-ທາງ ຈຳກັດ. ການປັບປຸງທາງເສັ້ນນີ້ໄດ້ປັບປຸງພື້ນຖານໂຄງລ່າງ ແລະ ສ້າງຄວາມເອື້ອອຳນວຍໃຫ້ແກ່ປະຊາຊົນທ້ອງຖິ່ນຫຼາຍຂຶ້ນ.

ມູນຄ່າການກໍ່ສ້າງເສັ້ນທາງທັງໝົດຂອງໂຄງການນີ້ແມ່ນ 142,487 ໂດລາ ສະຫະລັດ ຫຼື ເທົ່າກັບ 3,134,714,000 ກີບ ໂດຍໄດ້ຮັບການສະໜັບສະໜູນຈາກກອງທຶນພັດທະນາທ້ອງຖິ່ນ (TF) ໂດຍ ບໍລິສັດ ລ້ານຊ້າງ ມິເນໂຣນສ໌ ຈຳກັດ. ເຂົ້າຮ່ວມພິທີມອບ-ຮັບໂຄງການໃນຄັ້ງນີ້ ມີບັນດາການນຳຈາກສູນກາງ, ແຂວງສະຫວັນນະເຂດ ແລະ ເມືອງວິລະບູລີ ດັ່ງນີ້: ເປັນກຽດເຂົ້າຮ່ວມເປັນສັກຂີພະຍານ ຂອງທ່ານ ສັນຕິພາບ ພົມວິຫານ, ລັດຖະມົນຕີກະຊວງການເງິນ, ອະດີດເຈົ້າແຂວງສະຫວັນນະເຂດ ພ້ອມດ້ວຍຄະນະຈາກສູນກາງ, ທ່ານ ປອ ແສນສັກ ສຸລິສັກ, ຮອງເຈົ້າແຂວງສະຫວັນນະເຂດ, ທ່ານ ວາລີຍະ ສີຈັນທອງທິບ, ເຈົ້າເມືອງວິລະບູລີ, ທ່ານ ໄພມະນີ ວົງໄຊຄຳ, ຮອງເຈົ້າເມືອງ, ພ້ອມດ້ວຍພະນັກງານ-ລັດຖະກອນພາຍໃນເມືອງ, ທ່ານ ສະໝານ ອະເນກາ ຜູ້ອຳນວຍການໃຫຍ່ ແລະ ຮອງຜູ້ຈັດການໃຫຍ່ ບໍລິສັດ ລຊມລ ພ້ອມດ້ວຍພະນັກງານວິຊາການຈາກບໍລິສັດ, ຜູ້ຕາງໜ້າຈາກພາກລັດທີ່ກ່ຽວຂ້ອງ, ບໍລິສັດຜູ້ຮັບເໝົາ, ມີອຳນາດການປົກຄອງບ້ານ ແລະ ຊາວບ້ານເຂົ້າຮ່ວມ.

ໂຄງການເສັ້ນທາງດັ່ງກ່າວຖືເປັນຂີດໝາຍທີ່ສຳຄັນອັນໜຶ່ງ ເພື່ອເປັນນິມິດໝາຍຂອງການດຳເນີນງານ ໂຄງການບໍ່ຄຳ-ທອງ ເຊໂປນຄົບຮອບ 20 ປີ ແລະ ເພື່ອເປັນການກະກຽມຕ້ອນຮັບວັນສ້າງຕັ້ງເມືອງວິລະບູລີຄົບຮອບ 30 ປີ. ນອກຈາກນັ້ນ, ການສຳເລັດໂຄງການກໍ່ສ້າງເສັ້ນທາງ ໄກສອນ ພົມວິຫານ ຍັງເປັນການລະນຶກເຖິງວັນຄ້າຍວັນເກີດຂອງອະດີດປະທານປະເທດ ທ່ານ ໄກສອນ ພົມວິຫານ ຄົບຮອບ 103 ປີ, ເພື່ອເປັນສັນຍະລັກ ແລະ ສັນລະເສີນຄຸນງາມຄວາມດີຂອງປະທານໄກສອນ ພົມວິຫານ ອັນໃຫຍ່ຫຼວງທີ່ສຸດໃນການນຳພາ-ພາລະກິດຕໍ່ສູ້ປົດປ່ອຍຊາດ, ປົກປັກຮັກສາ ແລະສ້າງສາພັດທະນາປະເທດຊາດ. ເສັ້ນທາງທີ່ປັບປຸງນີ້ຄາດວ່າຈະເປັນປະໂຫຍດຢ່າງຫຼວງຫຼາຍຕໍ່ຜູ້ຊົມໃຊ້ທັງໝົດ, ໂດຍສະເພາະຊາວບ້ານພາຍໃນທ້ອງຖິ່ນ ແລະ ປະຊາຊົນທຸກຄົນ. ໂຄງການດັ່ງກ່າວໄດ້ສະແດງໃຫ້ເຫັນເຖິງຄວາມມຸ່ງໝັ້ນຂອງ ລຊມລ ກໍ່ຄື ບໍ່ຄຳ-ທອງ ເຊໂປນ ແລະ ຄູ່ຮ່ວມງານ ໃນການສະໜັບສະໜູນການພັດທະນາພື້ນຖານໂຄງລ່າງ ແລະ ຄວາມຜາສຸກຂອງຊຸມຊົນໃນພື້ນທີ່ອ້ອມຂ້າງຂອງໂຄງການ.

ການສຳເລັດ ແລະ ມອບ-ຮັບໂຄງການເສັ້ນທາງໄກສອນ ພົມວິຫານ ເປັນຜົນສຳເລັດອັນໃຫຍ່ຫຼວງຂອງຊຸມຊົນທ້ອງຖິ່ນ ແລະ ເປັນຂີດໝາຍອັນດີງາມໃນການພັດທະນາພື້ນຖານໂຄງລ່າງຂອງແຂວງສະຫວັນນະເຂດ. ລຊມລ ແລະ ຄູ່ຮ່ວມງານມີຄວາມພູມໃຈທີ່ໄດ້ປະກອບສ່ວນເຂົ້າໃນການປັບປຸງພື້ນຖານໂຄງລ່າງຂອງຊຸມຊົນທ້ອງຖິ່ນ ແລະ ບໍລິສັດຍາມໃດກໍ່ໃຫ້ຄຳໝັ້ນສັນຍາວ່າຈະສືບຕໍ່ສະໜັບສະໜູນນຳເອົາຄວາມຜາສຸກ, ການພັດທະນາ ແລະ ຄວາມສີວິໄລມາສູ່ຊຸມຊົນທ້ອງຖິ່ນ.

ໃນໂອກາດດັ່ງກ່າວ, ທ່ານ ໄພມະນີ ວົງໄຊຄຳ, ຮອງເຈົ້າເມືອງວິລະບູລີ ໄດ້ລາຍງານໃຫ້ຮູ້ວ່າ: "ໂດຍປະຕິບັດຕາມແຜນພັດທະນາເສດຖະກິດ-ສັງຄົມ ຄັ້ງທີ IX ຂອງລັດຖະບານ, ຄັ້ງທີ VIII ຂອງແຂວງສະຫວັນນະເຂດ ເຊິ່ງປະຕິບັດຕາມມະຕິຂອງຄະນະປະຈຳພັກເມືອງວິລະບູລີ ຕໍ່ກັບການສຸມໃສ່ພັດທະນາພື້ນຖານໂຄງລ່າງ ເພື່ອກະກຽມຄວາມພ້ອມຮອບດ້ານ ເຂົ້າໃນງານພິທີສະເຫຼີມສະຫຼອງ ຜົນສຳເລັດໃນການປົກປັກຮັກສາ ແລະ ສ້າງສາພັດທະນາເມືອງວິລະບູລີ ຄົບຮອບ 30 ປີ. ຄະນະບໍລິຫານງານພັກເມືອງ ຈຶ່ງເຫັນດີເປັນເອກະພາບ ແລະ ຮັບຮອງປັບປຸງເສັ້ນທາງຫຼາຍເສັ້ນພາຍໃນເມືອງ ແລະ ເທດສະບານເມືອງ ໃຫ້ເປັນຖະໜົນທີ່ໄດ້ມາດຕະຖານ, ເປັນຖະໜົນຕົວແບບຂອງເມືອງ ແມ່ນເຫັນດີໃຫ້ໃສ່ຊື່ຖະໜົນໜູຮັກ ພູມສະຫວັນ ແລະຖະໜົນໄກສອນພົມວິຫານ." ການກໍ່ສ້າງ ແລະປັບປຸງເສັ້ນທາງຕໍ່ໜ້າຫ້ອງວ່າການເມືອງ ແລະໃສ່ຊື່ເສັ້ນທາງຖະໜົນ ໄກສອນ ພົມວິຫານ ກໍ່ເພື່ອບັນລຸຈຸດປະສົງ ແລະຄາດໝາຍຄື: ເພື່ອປູກຈິດສຳນຶກ ແລະ ທວນຄືນມູນເຊື້ອໄຊຊະນະປະຫວັດສາດ ຂອງພາລະກິດແຫ່ງການຕໍ່ສູ້ປົດປ່ອຍຊາດ ໃນເມື່ອກ່ອນ ແລະຜົນສຳເລັດໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ພາຍໃຕ້ການນຳພາ-ຊີ້ນຳ ຂອງພັກ-ລັດເຮົາ ກໍ່ຄືປະທານ ໄກສອນ ພົມວິຫານ. ເພື່ອບຸກທະລຸທາງດ້ານແນວຄິດ, ຈິນຕະນາການ, ສ້າງໃຫ້ມີການຫັນປ່ຽນ ຢ່າງແຂງແຮງ, ເລິກເຊິ່ງ ແລະຮອບດ້ານ; ສ້າງຄວາມເຊື່ອໝັ້ນຕໍ່ພະນັກງານ, ສະມາຊິກພັກ ແລະປະຊາຊົນບັນດາເຜົ່າ ຕໍ່ກັບການນຳພາຂອງພັກ ແລະການຄຸ້ມຄອງຂອງລັດ ເພື່ອນຳເອົາເມືອງວິລະບູລີຂອງພວກເຮົາ ກ້າວຂຶ້ນສູ່ຄວາມວັດທະນາຖາວອນ.

ທ່ານ ສະໝານ ອະເນກາ, ຜູ້ອຳນວຍການ ແລະ ຮອງຜູ້ຈັດການໃຫຍ່ ລຊມລ ໄດ້ເນັ້ນໜັກເຖິງຄວາມມຸ່ງໝັ້ນຂອງບໍລິສັດ ໃນການຊຸກຍູ້ການພັດທະນາແບບຍືນຍົງ ຢູ່ເມືອງວິລະບູລີ ໂດຍທ່ານໄດ້ກ່າວວ່າ: "ຂ້າພະເຈົ້າຫວັງ ແລະ ເຊື່ອໝັ້ນວ່າ ປະຊາຊົນຊາວເມືອງວິລະບູລີ ຈະບັນລຸການພັດທະນາແບບ ຍືນຍົງ ຈາກການສະໜັບສະໜູນໂຄງການຕ່າງໆ ທີ່ກຳລັງດຳເນີນຢູ່ ຈາກໂຄງການກອງທຶນພັດ ທະນາທ້ອງຖິ່ນ (TF) ແລະ ກອງທຶນພັດທະນາຊ່ວຍເຫຼືອກຸ່ມຄົນຜູ້ດ້ອຍໂອກາດ (FADG). ທ່ານ ຍັງໄດ້ກ່າວຕື່ມອີກວ່າ: ພວກເຮົາຈະເພີ່ມການລົງທຶນຂອງພວກເຮົາ ເຂົ້າໃນການສຳຫລວດ ໃນເຂດພື້ນທີ່ສຳປະທານ ເພື່ອເຮັດແນວໃດ ຜັນຂະຫຍາຍ ໄລຍະອາຍຸການ ຫລືຊີວິດຂອງບໍ່ແຮ່ ໃຫ້ໄດ້ຫລາຍກວ່າ 10 ປີ."

ໃນໂອກາດດຽວກັນນັ້ນ, ທ່ານ ສັນຕິພາບ ພົມວິຫານ ຍັງໄດ້ເດີນທາງໄປຢ້ຽມຢາມພາກສະໜາມຂອງ ບໍ່ຄຳ-ທອງ ເຊໂປນ ຢ່າງເປັນທາງການ ເພື່ອຢ້ຽມຊົມການດຳເນີນງານຂອງໂຄງການ ແລະ ຊີ້ນຳວຽກງານການປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງບໍລິສັດຕໍ່ ສປປ ລາວ. ການຢ້ຽມຢາມຂອງທ່ານລັດຖະມົນຕີຄັ້ງນີ້ ໄດ້ເປັນຂີດໝາຍສຳຄັນທີ່ເນັ້ນເຖິງຄວາມມຸ່ງໝັ້ນຂອງລັດຖະບານ ໃນການສະໜັບສະໜູນ ແລະ ຮັບຮູ້ເຖິງບົດບາດອັນສຳຄັນຂອງຂະແໜງອຸດສາຫະກຳບໍ່ແຮ່ ຕໍ່ກັບການຊຸກຍູ້ການເຕີບໂຕທາງດ້ານເສດຖະກິດ ແລະ ການພັດທະນາຂອງ ສປປ ລາວ. ນອກຈາກນັ້ນ, ທ່ານລັດຖະມົນຕີ ຍັງໄດ້ໄປຢ້ຽມຢາມໂຮງງານຜະລິດຄຳ-ທອງ ເພື່ອຊົມຂະບວນການຜະລິດຄຳຢູ່ຫ້ອງຄຳ ແລະ ທ່ານຍັງໄດ້ໄປຢ້ຽມຢາມປະຕູທາງເຂົ້າຂອງບໍ່ໃຕ້ດິນທັນສະໄໝຂອງໂຄງການ ທັງນີ້ກໍ່ເພື່ອຮັບຮູ້ ແລະ ສ້າງຄວາມເຂົ້າໃຈກ່ຽວກັບວິທີ ແລະ ຂະບວນການຂຸດຄົ້ນບໍ່ແຮ່ໃຕ້ດິນຂອງບໍລິສັດ.

ໂຄງການກອງທຶນພັດທະນາທ້ອງຖິ່ນຂອງ ລຊມລ ໄດ້ສະໜອງຜົນປະໂຫຍດຢ່າງຫລວງຫລາຍ ໃຫ້ແກ່ຊຸມຊົນ ທ້ອງຖິ່ນ ຜູ້ທີ່ດຳລົງຊີວິດຢູ່ພື້ນທີ່ອ້ອມຂ້າງໂຄງການຂຸດຄົ້ນບໍ່ຄຳ-ທອງ ເຊໂປນ ມາເປັນເວລາ 2 ທົດສະວັດ. ການສະໜອງທຶນ ໄດ້ເພີ່ມຂຶ້ນຫຼາຍໆປີຕາມລຳດັບຈາກ US$96,000 ຕໍ່ປີ ໃນປີ 2004 ຂຶ້ນເປັນ US$750,000 ຕໍ່ປີ ໃນປີ 2014 ແລະ ຍັງຈະສືບຕໍ່ສະໜອງທຶນດັ່ງກ່າວ ໄປຈົນເຖິງໄລຍະສຸດທ້າຍຂອງໂຄງການຂຸດຄົ້ນບໍ່ແຮ່ໄດ້ຖືກປິດລົງ. ຄວາມມຸ່ງໝັ້ນຂອງ ລຊມລ ຕໍ່ກັບການພັດທະນາແບບຍືນຍົງ ແລະ ການຮ່ວມມືຢ່າງຕໍ່ເນື່ອງກັບລັດຖະບານ ສປປ ລາວ ຊີ້ໃຫ້ເຫັນເຖິງຄວາມຕັ້ງໃຈຂອງຕົນຕໍ່ກັບການພັດທະນາເສດຖະກິດ-ສັງຄົມຂອງພາກພື້ນ ແລະ ທ້ອງຖິ່ນ. ດ້ວຍການລົງທຶນທີ່ເພີ່ມຂຶ້ນ ແລະ ສະໜັບສະໜູນຊຸມຊົນທ້ອງຖິ່ນຢ່າງຕໍ່ເນື່ອງ, ລຊມລ ມີຄວາມຕັ້ງໃຈທີ່ຈະສືບຕໍ່ຊຸກຍູ້ການເຕີບໂຕແບບຍືນຍົງ, ໃນໄລຍະຍາວ ແລະ ສ້າງຄວາມຈະເລີນຮຸ່ງເຮືອງໃຫ້ແກ່ປະຊາຊົນເມືອງວິລະບູລີ ແລະ ສປປ ລາວ.






# ຮອງເຈົ້າຄອງນະຄອນຄຸນໝິງ ຢ້ຽມຢາມ LXML, ທີ່ຫ້ອງການ ນະຄອນຫຼວງວຽງຈັນ

ທ່ານ ຕ່າຍ ຮ່ວງໝິງ, ຮອງເຈົ້າຄອງນະຄອນຄຸນໝິງ, ແຂວງຢູນນານ ພ້ອມດ້ວຍຄະນະໄດ້ເດີນທາງມາຢ້ຽມຢາມ ແລະ ເຄື່ອນໄຫວວຽກງານຢູ່ ສປປ ລາວ. ໃນວັນທີ 12 ກັນຍາ 2023 ນີ້, ທ່ານ ຕ່າຍ ພ້ອມຄະນະ ໄດ້ເຂົ້າມາຢ້ຽມຢາມ ບໍລິສັດ ລ້ານຊ້າງ ມິເນໂຣນສ໌ ຈຳກັດ (ລຊມລ), ທີ່ຫ້ອງການໃຫຍ່ນະຄອນຫຼວງວຽງຈັນ, ເປັນກຽດຕ້ອນຮັບການເຂົ້າມາຢ້ຽມຢາມຈາກ ລຊມລ ໂດຍທ່ານ ສະໝານ ອະເນກາ, ຜູ້ອຳນວຍການໃຫຍ່ ລຊມລ ພ້ອມດ້ວຍພະແນກ ພົວພັນກັບຜູ້ມີສ່ວນຮ່ວມ ແລະ ຊຸມຊົນ (CSR). ໃນໂອກາດດັ່ງກ່າວນີ້ ທ່ານ ສະໝານ ໄດ້ນຳສະເໜີ ກ່ຽວກັບວຽກງານຄວາມຮັບຜິດຊອບຕໍ່ສັງຄົມຂອງບໍລິສັດ ຊື່ເຝີງ-ລຊມລ ທີ່ສະໜອງຜົນປະໂຫຍດແບບຍືນຍົງຢ່າງຕໍ່ເນື່ອງໃຫ້ແກ່ຊຸມຊົນເຈົ້າພາບ ຕໍ່ກັບການດຳເນີນໂຄງການເຊໂປນ. ສາມໂຄງການຕົ້ນຕໍໃນການພັດທະນາຊຸມຊົນລວມມີ ຄວາມປອດໄພທາງດ້ານສະບຽງອາຫານຜ່ານການເຮັດກະສິກຳ, ການສຶກສາໃຫ້ແກ່ຄົນລຸ້ນສືບທອດ ແລະ ດ້ານສາທາລະນະສຸກຊຸມຊົນ.

ບໍລິສັດ ຊື່ເຝີງ-ລຊມລ ເປີດໂອກາດການຈ້າງງານ, ການສ້າງຂີດຄວາມສາມາດໃຫ້ແກ່ຄົນລາວ, ສົ່ງເສີມຜູ້ຮັບເໝົາ ທ້ອງຖິ່ນ ລວມທັງຜູ້ສະໜອງ ແລະ ການບໍລິການຈາກເມືອງວິລະບູລີ ແລະ ແຂວງສະຫວັນນະເຂດ. ບໍລິສັດ ຊື່ເຝີງ-ລຊມລ ກຳລັງດຳເນີນວຽກງານການຄຸ້ມຄອງສິ່ງແວດລ້ອມ-ສັງຄົມ ທີ່ດີ, ແຜນຫຼຸດຜ່ອນຄວາມສ່ຽງຕໍ່ສິ່ງແວດລ້ອມທີ່ຢູ່ໃນມາດຕະຖານສາກົນທີ່ຍອມຮັບໄດ້ໃຫ້ເປັນຢ່າງດີ.

ເນື່ອງຈາກຜົນການປະຕິບັດງານທີ່ມີປະສິດທິພາບ, ລຊມລ ແມ່ນໄດ້ຮັບລາງວັນກຽດຕິມະສັກເກດ A+ ຈາກລັດຖະບານມາຢ່າງຕໍ່ເນື່ອງ, ຫຼຽນກາພັດທະນາ, ຫຼຽນກາແຮງງານ ຊັ້ນ 1, ລາງວັນການດຳເນີນງານດີເດັ່ນ ແລະ ໄດ້ຮັບໃບຍ້ອງຍໍສະມາຊິກຜູ້ຊົງຄຸນວຸທິຈາກສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ພ້ອມດ້ວຍຜົນສຳເລັດ ແລະ ລາງວັນໃນການຄຸ້ມຄອງສິ່ງແວດລ້ອມ ແລະ ຄວາມເປັນເລີດດ້ານການຂຸດຄົ້ນບໍ່ແຮ່ໃນ ASEAN.

ບໍລິສັດ ລຊມລ ເປັນໜຶ່ງໃນຜູ້ລົງທຶນດ້ານບໍ່ແຮ່ລະດັບສາກົນອັນດັບຕົ້ນໆຂອງປະເທດລາວ ນອກຈາກບໍລິສັດພູເບຍມາຍນິ້ງ (PBM) ຫຼາຍປີຜ່ານມາ, ລຊມລ ໄດ້ໃຫ້ການສະໜັບສະໜູນບັນດາວິທະຍາໄລວິຊາຊີບຂອງລາວຢ່າງຕໍ່ເນື່ອງ ໂດຍໄດ້ມີການເຊັ່ນບົດບັນທຶກຄວາມເຂົ້າໃຈ (MOU) ເປັນເວລາຫຼາຍປີໃນໄລຍະຜ່ານມາ ແລະ ເມື່ອບໍ່ດົນມານີ້ໄດ້ເຊັ່ນບົດບັນທຶກຄວາມເຂົ້າໃຈ (MOU) ກັບວິທະຍາໄລເຕັກນິກວິຊາຊີບລາວ-ເຢຍລະມັນ ເລີ່ມແຕ່ປີ 2022 ຮອດປີ 2025. ໂດຍທາງບໍລິສັດໄດ້ສືບຕໍ່ສະໜອງຊຸດການຊ່ວຍເຫຼືອ ແລະ ສິ່ງອຳນວຍການຮຽນໃຫ້ແກ່ນັກສຶກສາດີເດັ່ນຈາກເມືອງວິລະບູລີ. ລຊມລ ຍັງໄດ້ມີໂຄງການຮ່ວມມືດ້ານພາລະກິດສຳຄັນກັບສຳນັກງານມໍລະດົກວັດທະນະທຳແຂວງຢຸນນານຕໍ່ກັບໂຄງການບໍ່ຄຳ-ທອງ ເຊໂປນ ເພື່ອແບ່ງປັນການສຶກສາກ່ຽວກັບວັດຖຸບູຮານ ແລະ ມໍລະດົກທາງປະຫວັດສາດໃນບໍລິເວນພື້ນທີ່ຂຸດຄົ້ນແຮ່ຄຳ-ທອງ. ຊື່ເຝີງຊຸດໂກນລ໌ ພວມສະແຫວງຫາການເຕີບໂຕຢູ່ ສປປ ລາວ ແລະ ໃນທົ່ວໂລກ.

ທ່ານສະໝານ ຍັງໄດ້ຍົກໃຫ້ເຫັນເຖິງການຊຸກຍູ້ການພົວພັນທາງທຸລະກິດລະຫວ່າງລາວ-ຈີນ ຢ່າງກ້າວໜ້າຂອງ ລຊມລ ເຊັ່ນ: ໂອກາດດ້ານການສຶກສາ ແລະ ການຝຶກອົບຮົມຂອງມະຫາວິທະຍາໄລ ເວີຍຟາງ (Weifang) ປະເທດຈີນ ໃຫ້ແກ່ ແຂວງສະຫວັນນະເຂດ. ທ່ານ ສະໝານ ໄດ້ກ່າວວ່າ: "ພວກເຮົາຮູ້ສຶກເປັນກຽດທີ່ໄດ້ຕ້ອນຮັບທ່ານ ຕ່າຍ ມາທີ່ ບໍລິສັດຂອງພວກເຮົາ ແລະ ຍິນດີຕ້ອນຮັບທ່ານ ຕ່າຍ ພ້ອມດ້ວຍຄະນະສູ່ ສປປ ລາວ. "ພວກເຮົາຫວັງວ່າຈະໄດ້ສືບຕໍ່ປຶກສາຫາລືກ່ຽວກັບຄວາມມຸ່ງໝັ້ນ ເພື່ອສືບຕໍ່ຊຸກຍູ້ການພົວພັນທາງທຸລະກິດລະຫວ່າງລາວ-ຈີນ ແລະ ວິໄສທັດໃນການພັດທະນາ ເພື່ອສ້າງຜົນປະໂຫຍດທາງບວກຂອງພວກເຮົາ." ລຊມລ ມີຄວາມມຸ່ງໝັ້ນທີ່ຈະເປັນບໍລິສັດຂຸດຄົ້ນບໍ່ແຮ່ທີ່ມີຄວາມຮັບຜິດຊອບຕໍ່ສິ່ງແວດລ້ອມ-ສັງຄົມ ແລະ ມີຄວາມຍືນຍົງ ພ້ອມທັງມີຄວາມພາກພູມໃຈທີ່ຈະສືບຕໍ່ປະກອບສ່ວນທີ່ດີໃຫ້ແກ່ຊຸມຊົນທ້ອງຖິ່ນ ແລະ ສິ່ງແວດລ້ອມ.

ໃນໂອກາດການຢ້ຽມຢາມຄັ້ງນີ້, ທ່ານ ຕ່າຍ ໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ບໍລິສັດຈີເຝີງໂກນລ໌ ທີ່ເປັນໜຶ່ງໃນບໍລິສັດທີ່ມີຊື່ສຽງ ແລະ ປະສົບຜົນສຳເລັດໃນການດຳເນີນງານຢູ່ປະເທດຈີນ, ທ່ານໄດ້ສະແດງຄວາມສົນໃຈຕໍ່ການດຳເນີນງານຂອງ ລຊມລ ແລະ ການປະກອບສ່ວນຂອງບໍລິສັດຕໍ່ປະຊາຊົນທ້ອງຖິ່ນ ແລະ ສິ່ງແວດລ້ອມ. ນອກນັ້ນ, ທ່ານຍັງໄດ້ສະແດງຄວາມຂອບໃຈຕໍ່ຄວາມພະຍາຍາມຂອງ ລຊມລ ໃນການສົ່ງເສີມການພົວພັນທາງທຸລະກິດລະຫວ່າງ ລາວ-ຈີນ ແລະ ຄວາມມຸ່ງໝັ້ນໃນການປະຕິບັດການຂຸດຄົ້ນບໍ່ແຮ່ຢ່າງມີຄວາມຮັບຜິດຊອບ ແລະ ຍືນຍົງ. ທ່ານ ຕ່າຍ ກ່າວວ່າ, "ຂ້າພະເຈົ້າຫວັງວ່າໃນອະນາຄົດ ລຊມລ ຈະຮ່ວມມືກັບບັນດາບໍລິສັດຂຸດຄົ້ນບໍ່ແຮ່ຢູ່ຄຸນໝິງ ເພື່ອເສີມຂະຫຍາຍຄວາມອາດສາມາດຂອງທັງສອງປະເທດ ແລະ ເສີມຂະຫຍາຍການພັດທະນາແບບຍືນຍົງໃນອະນາຄົດ". ທ່ານຍັງໄດ້ສະແດງການສະໜັບສະໜູນຂະແໜງການສຶກສາໃນລາວ ແລະ ໄດ້ຍົກໃຫ້ເຫັນເຖິງໂອກາດທີ່ ລຊມລ ຈະໄດ້ຮັບຈາກການຝຶກອົບຮົມໃຫ້ແກ່ພະນັກງານຂອງຕົນ. ນອກຈາກນັ້ນ ທ່ານຍັງໄດ້ເຊື້ອເຊີນພະນັກງານ ລຊມລ ທຸກທ່ານ ແລະ ປະຊາຊົນລາວ ໃຫ້ໄປຢ້ຽມຢາມນະຄອນຄຸນໝິງເມື່ອມີໂອກາດ. ພ້ອມກັນນີ້, ທ່ານຮອງເຈົ້າຄອງນະຄອນຄູນໝິງ ພ້ອມຍິນດີຕ້ອນຮັບບໍລິສັດ ຫຼື ນັກທຸລະກິດສ່ວນບຸກຄົນ ໃນກໍລະນີທີ່ມີຄວາມສົນໃຈ ໃນການດຳເນີນທຸລະກິດປຸງແຕ່ງແຮ່ທອງ ແລະ ບໍ່ແຮ່ອື່ນໆ ໃນແຂວງຢຸນນານ.

ລຊມລ ຍັງຄົງຍຶດໝັ້ນໃນພາລະກິດຂອງຕົນໃນການເປັນບໍລິສັດຂຸດຄົ້ນບໍ່ແຮ່ທີ່ມີຄວາມຮັບຜິດຊອບຕໍ່ສັງຄົມ ແລະ ສ້າງຄວາມຍືນຍົງດ້ານເສດຖະກິດໃຫ້ແກ່ປະເທດຊາດ. ລຊມລ ຈະຍັງສືບຕໍ່ໃຫ້ການປະກອບສ່ວນອັນດີໃຫ້ແກ່ຊຸມຊົນທ້ອງຖິ່ນ ແລະ ສິ່ງແວດລ້ອມ ພ້ອມທັງສົ່ງເສີມການພົວພັນທາງທຸລະກິດລະຫວ່າງ ລາວ-ຈີນ ໃຫ້ນັບມື້ນັບດີຂຶ້ນກວ່າເກົ່າ.






# LXML ເຊໂປນ ສະໜັບສະໜູນ ການບູລະນະສ້ອມແປງ ຫ້ອງ ICU ໂຮງໝໍແຂວງ ສະຫວັນນະເຂດ

ໂຮງໝໍແຂວງສະຫວັນນະເຂດໄດ້ຮັບການສະໜັບສະໜູນທຶນມູນຄ່າ 100.000.000 ກີບ ຈາກ ບໍລິສັດ ລ້ານຊ້າງ ມິເນໂຣນສ໌ ລິມິເຕັດ ບໍ່ຄໍາ-ທອງ ເຊໂປນ (ລຊມລ) ເພື່ອບູລະນະສ້ອມແປງຫ້ອງ ICU ຂອງໂຮງໝໍແຂວງ. ການບູລະນະຄັ້ງນີ້ຈະຊ່ວຍໃຫ້ໂຮງໝໍສາມາດຮອງຮັບຜູ້ປ່ວຍສຸກເສີນໄດ້ຫຼາຍຂຶ້ນກວ່າເກົ່າ ແລະ ຍົກສູງຄວາມອາດສາມາດໃນການຮັບມືກັບກໍລະນີສຸກເສີນ ໂດຍສະເພາະ ຜູ້ບາດເຈັບຮ້າຍແຮງຈາກອຸບັດຕິເຫດທາງຖະໜົນ.

ທ່ານ ສະໝານ ອະເນກາ, ຜູ້ອໍານວຍການໃຫຍ່ ລຊມລ ໄດ້ກ່າວວ່າ: "ສະຫວັນນະເຂດ ເປັນແຂວງທີ່ມີຈໍານວນປະຊາກອນຫຼາຍທີ່ສຸດ ໃນ ສປປ ລາວ ແລະ ເປັນສູນລວມໜຶ່ງດ້ານເສດຖະກິດຂອງປະເທດ. ສະນັ້ນ, ການຮັບມືທາງການແພດຢ່າງທ່ວງທັນ ແລະ ຢ່າງມີປະສິດທິຜົນຈຶ່ງມີຄວາມສໍາຄັນເປັນຢ່າງຍິ່ງ. ດັ່ງນັ້ນ, ພວກເຮົາຫວັງວ່າການຊ່ວຍເຫຼືອຄັ້ງນີ້ຈະຍົກສູງການບໍລິການຂອງໂຮງໝໍແຂວງສະຫວັນນະເຂດ ໂດຍສະເພາະພະແນກ ICU ໃນການຮັບມືກັບຜູ້ປ່ວຍຢ່າງທັນການ ແລະ ຢ່າງມີປະສິດທິຜົນ."

ເຈົ້າແຂວງໆສະຫວັນນະເຂດ ທ່ານ ບຸນໂຈມ ອຸບົນປະເສີດ ໄດ້ໃຫ້ກຽດຮັບເອົາການຊ່ວຍເຫຼືອດ້ານການເງິນໃນຄັ້ງນີ້ ໃນພິທີມອບຮັບຄັ້ງວັນທີ 21 ພຶດສະພາ 2023 ເຊິ່ງເປັນງານລະດົມທຶນການກຸສົນເພື່ອການບູລະນະສ້ອມແປງ ໂຮງໝໍແຂວງສະຫວັນນະເຂດ.

ໃນຫຼາຍໆປີຜ່ານມາ, ລຊມລ ໄດ້ໃຫ້ການສະໜັບສະໜູນ ແລະ ມອບອຸປະກອນດ້ານການແພດໃຫ້ແກ່ໂຮງໝໍແຂວງສະຫວັນນະເຂດ ເຊັ່ນ ອຸປະກອນຢາສະຫລົບ, ເຕົາອົບເດັກເກີດໃໝ່, ຊຸດອົກຊີແຊນ ແລະ ອຸປະກອນສໍາຄັນອື່ນໆ. ມາເຖິງປັດຈຸບັນ, ລຊມລ ໄດ້ໃຫ້ການຊ່ວຍເຫຼືອ ແກ່ໂຮງໝໍແຂວງສະຫວັນນະເຂດລວມມູນຄ່າທັງໝົດ US$120.000.

ທ່ານ ສະໝານ ອະເນກາ, ຜູ້ອໍານວຍການໃຫຍ່ ລຊມລ ໄດ້ກ່າວຕື່ມວ່າ: "ຂ້າພະເຈົ້າມີຄວາມພາກພູມໃຈເປັນຢ່າງຍິ່ງທີ່ໄດ້ສະໜັບສະໜູນໂຮງໝໍແຂວງສະຫວັນນະເຂດ ເພາະວ່າ ການສະໜັບສະໜູນນີ້ຈະເປັນປະໂຫຍດໂດຍກົງໃຫ້ແກ່ເດັກນ້ອຍ ແລະ ແມ່ຍິງຢູ່ໃນຊຸມຊົນຂອງພວກເຮົາ. ລຊມລ ມີຄວາມໝາຍໝັ້ນຕໍ່ຄວາມປອດໄພ ແລະ ການສະໜັບສະໜູນສຸຂະພາບຂອງພະນັກງານ ແລະ ຊຸມຊົນຂອງພວກເຮົາ. ພະນັກງານສ່ວນໃຫຍ່ຂອງພວກເຮົາຢູ່ພາກສະໜາມບໍ່ຄໍາ-ທອງ ເຊໂປນ ກໍ່ ອາໄສຢູ່ ສະຫວັນນະເຂດ ແລະ ການສະໜັບສະໜູນດັ່ງກ່າວນີ້ກໍສະແດງໃຫ້ເຫັນເຖິງຄວາມມຸ່ງໝັ້ນຂອງພວກເຮົາຕໍ່ການພັດທະນາ ແລະ ຄວາມກ້າວໜ້າຢ່າງຕໍ່ເນື່ອງຍິ່ງໆຂຶ້ນໄປ."

ໃນປີ 2021, ລຊມລ ໄດ້ປະກອບສ່ວນ US$100.000 ເພື່ອສ້າງໂຮງໝໍພາກສະໜາມຢູ່ແຂວງສະຫວັນນະເຂດ ແລະ ໄດ້ສະໜັບສະໜູນຄວາມພະຍາຍາມຂອງລັດຖະບານໃນການຮັບມືກັບການລະບາດຂອງພະຍາດໂຄວິດ-19.

ໃນໃນໄລຍຜ່ານມາ, ລຊມລ ໄດ້ໃຫ້ການຮ່ວມມືເປັນຄັ້ງປະຫວັດສາດກັບ ກະຊວງສາທາລະນະສຸກ, ສະຫະພັນແມ່ຍິງລາວ ແລະ ອົງການ UNICEF ໂດຍສະໜອງທຶນ US$2,9 ລ້ານເຂົ້າໃສ່ ໂຄງການ 1000 ວັນ ເພື່ອແກ້ໄຂບັນຫາຂາດໂພຊະນາການໃນແມ່ ແລະ ເດັກ.

ລຊມລ ໄດ້ລົງທຶນ US$270.000 ເຂົ້າໃນໂຄງການສຸຂະພາບແມ່ ແລະ ເດັກ ຮ່ວມກັບສາຖາບັນເບີເນດ໌ ລະຫວ່າງປີ 2008 ເຖິງປີ 2011. ນັບແຕ່ປີ 2010 ເຖິງ 2017, ລຊມລ ໄດ້ສະໜັບສະໜູນກອງປະຊຸມປະຈໍາປີຂອງແພດເດັກທີ່ຈັດໂດຍ ອົງການ Health Frontiers ທີ່ແນໃສ່ປັບປຸງການຮັກສາສຸຂະພາບເດັກໂດຍການແລກປ່ຽນພາກປະຕິບັດທີ່ດີທີ່ສຸດ. ນອກຈາກນັ້ນ, ລຊມລ ກໍໄດ້ໃຫ້ການສະໜັບສະໜູນຢ່າງຫຼວງຫຼາຍແກ່ ໂຮງໝໍເມືອງວິລະບູລີ ແລະ ໂຮງໝໍມິດຕະພາບທີ່ ນະຄອນຫຼວງວຽງຈັນ ລວມທັງ ລົດໂຮງໝໍ, ເຕົາອົບເດັກເກີດໃໝ່ ແລະ ອຸປະກອນການແພດສໍາຄັນອື່ນໆ ພ້ອມທັງໄດ້ຈັດຕັ້ງປະຕິບັດໂຄງການສົ່ງເສີມວຽກງານນໍ້າ, ສຸຂະອະນາໄມ ແລະ ສຸຂະພິບານ.

LXML ໝາຍໝັ້ນທີ່ຈະສືບຕໍ່ລົງທຶນໃສ່ໂຄງການພັດທະນາຊຸມຊົນຂອງພວກເຮົາ ເພື່ອສະໜັບສະໜູນຊີວິດການເປັນຢູ່ທີ່ເຂັ້ມແຂງຂອງປະຊາຊົນ ຫຼັງຈາກທີ່ບໍ່ຄໍາ-ທອງ ເຊໂປນປິດໂຕລົງ ລວມທັງການປັບປຸງການບໍລິການດ້ານສຸຂະພາບຂັ້ນພື້ນຖານ ແລະ ສຸຂະພາບແມ່ ແລະ ເດັກ.






# LXML ເຊໂປນ ມອບໂຄງການກໍ່ສ້າງຝາຍນໍ້າລົ້ນ ໃຫ້ປະຊາຊົນ ບ້ານນໍ້າປະເຄນ, ເມືອງວິລະບູລີ

**ສິງຫາ** 2023, ບໍລິສັດ ລ້ານຊ້າງ ມິເນໂຣນສ໌ ຈໍາກັດ (ລຊມລ) ໄດ້ເຂົ້າຮ່ວມພິທີ ມອບ-ຮັບໂຄງການກໍ່ສ້າງຝາຍນໍ້າລົ້ນ "ຕາດລີລາດ-ລີເລັ່ງ" ເພື່ອການປູກຝັງ ແບບມີສ່ວນຮ່ວມຈາກປະຊາຊົນ ແລະ ອໍານາດການປົກຄອງບ້ານນໍ້າປະເຄນ ທີ່ສະໜັບສະໜູນໂດຍ ບໍລິສັດ ລ້ານຊ້າງ ມິເນໂຣນສ໌ ຈໍາກັດ ໂດຍຜ່ານກອງທຶນພັດທະນາທ້ອງຖິ່ນ (Community Trust Fund) ລວມມູນຄ່າ US$10.612, ເຊິ່ງໄດ້ເລີ່ມລົງມືກໍ່ສ້າງເມື່ອວັນທີ 24 ກໍລະກົດ 2020 ແລະ ສໍາເລັດການກໍ່ສ້າງ ເມື່ອວັນທີ 24 ສິງຫາ 2023, ໃຊ້ເວລາດໍາເນີນການກໍ່ສ້າງ 3 ປີ. ເຂົ້າຮ່ວມໃນພິທີມອບຮັບໂຄງການດັ່ງກ່າວ ມີ ທ່ານ ວາລີຍະ ສີຈັນທອງທິບ, ເຈົ້າເມືອງ ວິລະບູລີ, ຜູ້ຕ່າງໜ້າຫ້ອງການກະສິກໍາເມືອງ, ຜູ້ຕ່າງໜ້າອໍານາດການປົກຄອງເມືອງວິລະບູລີ, ທ່ານ ສະໝານ ອະເນກາ, ຜູ້ອໍານວຍການໃຫຍ່ ລຊມລ ພ້ອມດ້ວຍພະນັກງານວິຊາການຈາກທາງບໍລິສັດ, ພາກລັດ, ອໍານາດການປົກຄອງບ້ານ ແລະ ປະຊາຊົນບ້ານນໍ້າປະເຄນເຂົ້າຮ່ວມ.

ໂຄງການກໍ່ສ້າງຝາຍນໍ້າລົ້ນ "ຕາດລີລາດ-ລີເລັ່ງ" ເປັນການສ້າງຜົນປະໂຫຍດທີ່ດີໃຫ້ແກ່ປະຊາຊົນບ້ານນໍ້າປະເຄນທຸກຄົນທີ່ຈະໄດ້ຮັບຜົນປະໂຫຍດໂດຍກົງຈາກໂຄງການນີ້, ໂດຍສະເພາະແມ່ນເພື່ອອໍານວຍຄວາມສະດວກໃຫ້ແກ່ປະຊາຊົນໃນພື້ນທີ່ ໄດ້ນໍາໃຊ້ເຂົ້າໃນການທໍາມະຫາກິນເປັນຕົ້ນແມ່ນ ການເຮັດການກະເສດ, ການປູກຝັງຕ່າງໆ ຈະເປັນການສະໜອງແຫຼ່ງນໍ້າທີ່ເອື້ອອໍານວຍໃຫ້ແກ່ລະບົບຊົນລະປະທານຕະຫຼອດປີ, ເຊິ່ງຈະຊ່ວຍໃຫ້ປະຊາຊົນສາມາດປູກພືດໄດ້ຕະຫຼອດລະດູການ, ເຊິ່ງບໍ່ພຽງແຕ່ເປັນການສ້າງລາຍຮັບໃຫ້ແກ່ຊຸມຊົນເທົ່ານັ້ນ, ແຕ່ຍັງເປັນການສ້າງຄວາມໝັ້ນຄົງດ້ານສະບຽງອາຫານ ແລະ ສ້າງຊີວິດການເປັນຢູ່ທີ່ດີໃຫ້ແກ່ຊຸມຊົນ. ໂຄງການນີ້ແມ່ນເປັນການຢັ້ງຢືນເຖິງຄວາມພະຍາຍາມຢ່າງຕໍ່ເນື່ອງຂອງ ບໍລິສັດ ລຊມລ ໃນການສະໜັບສະໜູນການພັດທະນາແບບຍືນຍົງໃຫ້ແກ່ເມືອງວິລະບູລີຕະຫຼອດມາ.

ໃນໂອກາດດັ່ງກ່າວນີ້ ທ່ານ ວາລີຍະ ສີຈັນທອງທິບ ໄດ້ສະແດງຄວາມຂອບໃຈຕໍ່ ລຊມລ ທີ່ໄດ້ໃຫ້ທຶນ ແລະ ແນ່ໃສ່ການກະສິກໍາ ເພື່ອຮັບປະກັນທາງດ້ານສະບຽງອາຫານ ແລະ ຍັງສົ່ງຜົນບວກໃສ່ການທ່ອງທ່ຽວແບບທໍາມະຊາດ ເຊິ່ງຈະສ້າງລາຍຮັບໃຫ້ແກ່ປະຊາຊົນທ້ອງຖິ່ນ ແລະ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງທ້ອງຖິ່ນ. ນອກນີ້, ບໍລິສັດຍັງໄດ້ສົ່ງເສີມການປູກຝັງ ແລະ ລ້ຽງສັດດ້ວຍທຶນຫມູນວຽນນໍາອີກດ້ວຍ ເຊິ່ງເຮັດໃຫ້ປະຊາຊົນສາມາດເຂົ້າເຖິງແຫຼ່ງຊັບພະຍາກອນທີ່ສໍາຄັນ ເພື່ອມາປັບປຸງການຜະລິດກະສິກໍາ, ເຮັດໃຫ້ສາມາດເພີ່ມຜົນຜະລິດທີ່ດີຂຶ້ນ ແລະ ມີກໍາໄລເພີ່ມຂຶ້ນກວ່າເກົ່າ.

ທ່ານ ສະໝານ ອະເນກາ ໄດ້ມີຄໍາເຫັນບາງຕອນວ່າ: "ຂ້າພະເຈົ້າເຊື່ອໝັ້ນວ່າປະຊາຊົນຊາວເມືອງວິລະບູລີຈະບັນລຸ ການພັດທະນາແບບຍືນຍົງ ຈາກການສະຫນັບສະຫນູນຂອງບັນດາໂຄງການຕ່າງໆຂອງບໍລິສັດທີ່ກໍາລັງດໍາເນີນຢູ່ ເຊັ່ນ: ໂຄງການກອງທຶນພັດທະນາທ້ອງຖິ່ນ ແລະ ກອງທຶນພັດທະນາຊ່ວຍເຫລືອກຸ່ມຄົນຜູ້ດ້ອຍໂອກາດ, ຊຶ່ງນັບຕັ້ງແຕ່ປີ 2019 ຫາ 2023 ກອງທຶນດັ່ງກ່າວ ໄດ້ລົງທຶນໃຫ້ການຊ່ວຍເຫຼືອຄອບຄົວຜູ້ດ້ອຍໂອກາດທັງໝົດລວມມູນຄ່າຫຼາຍກວ່າ 1,200,000,000 ກີບ, ເຊິ່ງມີ 54 ຄອບຄົວໄດ້ຮັບຜົນປະໂຫຍດຈາກກອງທຶນນີ້ ໂດຍລວມແມ່ນໄດ້ຈັດຕັ້ງປະຕິບັດຫຼາຍກວ່າ 260 ໂຄງການ ໃນ 47 ຊຸມຊົນ ໂດຍການລົງທຶນທັງໝົດ US$3,4. ບໍລິສັດຈະສືບຕໍ່ໃຫ້ການປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງ ສປປ ລາວ ໃນອີກຫຼາຍປີຂ້າງຫນ້າ ໂດຍຜ່ານການຜະລິດຄໍາ, ເຊິ່ງ ປີ 2023 ແຜນຄາດຄະເນຜະລິດຄໍາໃຫ້ໄດ້ໃນລະດັບ 6.2 ໂຕນ."

ທ່ານ ນາຍບ້ານ ນໍ້າປະເຄນ ກໍ່ໄດ້ກ່າວຄໍາຂອບໃຈ ມາຍັງພັກ-ລັດ ແລະ ການນໍາບໍລິສັດ ລ້ານຊ້າງ ມິເນໂຣນສ໌ ຈໍາກັດ ທີ່ໄດ້ໃຫ້ການສະຫນັບສະຫນູນທຶນຮອນ ແລະ ອຸປະກອນຕ່າງໆ ໃນການສ້າງຝາຍນໍ້າລົ້ນ ເພື່ອການກະສິກໍາ ແລະ ການພັດທະນາບ້ານນໍ້າປະເຄນ ເຮັດໃຫ້ມີຄວາມສະດວກສະບາຍໃນການທໍາມາຫາກິນ ແລະ ເປັນບ່ອນຜະລິດທາງດ້ານກະສິກໍາໃຫ້ແກ່ພໍ່ແມ່ປະຊາຊົນຊາວບ້ານນໍ້າປະເຄນ.

ໂຄງການກອງທຶນພັດທະນາທ້ອງຖິ່ນ ໄດ້ສະຫນອງຜົນປະໂຫຍດຢ່າງຫລວງຫລາຍ ໃຫ້ແກ່ຊຸມຊົນ ທ້ອງຖິ່ນຜູ້ທີ່ດໍາລົງຊີວິດຢູ່ພື້ນທີ່ອ້ອມຂ້າງໂຄງການຂຸດຄົ້ນບໍ່ຄໍາ-ທອງ ເຊໂປນ ມາຫລາຍກ່ວາ 19 ປີ. ການສະຫນອງທຶນ ໄດ້ເພີ່ມຂຶ້ນທຸກໆປີຕາມລໍາດັບຈາກ US$96,000 ຕໍ່ປີ ຂຶ້ນເປັນ US$750,000 ຕໍ່ປີ ແລະ ຍັງຈະສືບຕໍ່ສະຫນອງທຶນດັ່ງກ່າວ ໄປຈົນເຖິງໄລຍະສຸດທ້າຍຂອງໂຄງການຂຸດຄົ້ນບໍ່ແຮ່ໄດ້ຖືກປິດລົງ.



# LXML ເຊໂປນ ມອບ US$5.903 ລ້ານ ຄ່າພາສີຊັບພະຍາກອນແຮ່ທາດ ໄຕມາດ 3 ປີ 2023 ໃຫ້ແກ່ລັດຖະບານລາວ

ໂດຍອີງຕາມແຈ້ງການຂອງຂະແໜງການທີ່ກ່ຽວຂ້ອງຂອງພາກລັດ ທີ່ໄດ້ມອບໝາຍໃຫ້ແຂວງເປັນຜູ້ເກັບພັນທະພາສີ ແລະ ອາກອນ ຈາກບໍລິສັດ, ຕົກມາໃນ ວັນທີ 28 ພະຈິກ 2023 ທີ່ຫ້ອງວ່າການປົກຄອງແຂວງສະຫວັນນະເຂດ, ບໍລິສັດ ລ້ານຊ້າງ ມິເນໂຣນສ໌ ຈຳກັດ ໄດ້ມອບພາສີຊັບພະຍາກອນແຮ່ທາດ ໃຫ້ແກ່ແຂວງສະຫວັນນະເຂດ ເປັນຈຳນວນ US$ 5,903,829.22 (ຫ້າລ້ານ ເກົ້າແສນ ສາມພັນ ແປດຮ້ອຍ ຊາວເກົ້າໂດລາ ສະຫະລັດ) ທີ່ໄດ້ຈາກການຜະລິດ ແລະ ຈຳໜ່າຍໂລຫະຄຳ ແລະ ທອງ ຂອງໂຄງການຂຸດຄົ້ນບໍ່ຄຳ-ທອງ ເຊໂປນ ໃນໄຕມາດທີ 3 ຂອງສົກປີ 2023 ນີ້.

ຝ່າຍບໍລິສັດ ແມ່ນມອບໂດຍທ່ານ ສະໝານ ອະເນກາ, ຜູ້ອຳນວຍການໃຫຍ່ ບໍລິສັດ ລ້ານຊ້າງ ມິເນໂຣນສ໌ ຈຳກັດ (ລຊມລ) ແລະ ເປັນກຽດຮັບຈາກຝ່າຍລັດຖະບານໂດຍທ່ານ ປອ ແສນສັກ ສຸລິສັກ ຮອງເຈົ້າແຂວງສະຫວັນນະເຂດ, ເຂົ້າຮ່ວມໃນພິທີມອບ-ຮັບ ລວມມີ ທ່ານ ບຸນລ້ອນ ລີໄຊຍະລາດ -ຫົວໜ້າພະແນກ ພະລັງງານ ແລະ ບໍ່ແຮ່, ທ່ານ ຄຳຜຸຍ ສີບຸນເຮືອງ - ຫົວໜ້າພະແນກແຜນການ ແລະ ການລົງທຶນ, ທ່ານ ບຸນສີ ຊຸນນະເສນ, ຮອງຫົວໜ້າພະແນກການເງິນ, ທ່ານ ເພັດດາລາ ແກ້ວສາລີ, ຫົວໜ້າສ່ວຍສາອາກອນແຂວງ, ທ່ານ ເພັດປະເສີດ ວັນນະໄຊ, ຮອງຫົວໜ້າຂະແໜງຄຸ້ມຄອງຊັບສິນລັດ. ສຳລັບຝ່າຍບໍລິສັດ ລວມມີ: ທ່ານ ຈັນທອນ ເນົາວະລາດ, ຮອງຜູ້ອຳນວຍການໃຫຍ່ ລຊມລ, ທ່ານ ນາງ ດາວມະນີ ຈັນພະແກ້ວ, ຮອງຜູ້ຈັດການຝ່າຍພົວພັນລັດຖະບານ ບໍລິສັດ ລຊມລ ແລະ ທ່ານ ນາງ ລັດສະນີ ສີສານ, ຫົວໜ້າສາຍງານພົວພັນລັດຖະບານຫ້ອງການສະຫວັນນະເຂດ.

ໃນໂອກາດດັ່ງກ່າວນີ້ ທ່ານ ສະໝານ ອະເນກາ ໄດ້ສະແດງຄວາມພາກພູມໃຈ ທີ່ທາງບໍລິສັດ ໄດ້ຮັບໂອກາດໃຫ້ທັນມາມອບພັນທະພາສີ ແລະ ອາກອນ ໃຫ້ແກ່ແຂວງທີ່ຕັ້ງຂອງໂຄງການ ພ້ອມທັງໄດ້ກ່າວຂອບໃຈມາຍັງທ່ານຮອງເຈົ້າແຂວງ ພ້ອມດ້ວຍຫົວໜ້າ ແລະ ຕາງໜ້າຈາກພະແນກການທີ່ກ່ຽວຂ້ອງ ຂອງແຂວງທີ່ໄດ້ເຂົ້າຮ່ວມໃນການມອບ-ຮັບໃນຄັ້ງນີ້ ພ້ອມທັງໄດ້ລາຍງານພັນທະຕ່າງໆ ທີ່ບໍລິສັດ ລຊມລ ໄດ້ມອບໃຫ້ລັດໃນທີ່ຜ່ານມາມີເຊັ່ນ ຄ່າສຳປະທານ, ອາກອນກຳໄລ 33,3%, ອາກອນເງິນເດືອນ, ເງິນປັນຜົນ, ເງິນຫັກຈາກການຜະລິດຄຳ-ທອງ ທີ່ໄດ້ປັບໃຫ້ເພີ້ມຂື້ນຈາກ 1 ໂດລາ ຂື້ນມາເປັນ 3 ໂດລາ ຕໍ່ ອອນສ໌, ເງິນພາສີຊັບພະຍາກອນແຮ່ທາດຕ່າງໆ ແລະ ທ່ານຍັງໄດ້ກ່າວຕື່ມອີກວ່າ: ເງິນບ້ວງດັ່ງກ່າວເມື່ອສູນກາງມອບມາໃຫ້ແຂວງກໍ່ຈະເປັນປະໂຫຍດຢ່າງຍິ່ງຕໍ່ແຂວງສະຫວັນນະເຂດ ໂດຍຈະໄດ້ເປັນການປະກອບ ສ່ວນ ເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງແຂວງ ແລະ ເມືອງວິລະບູລີ.

ໃນໂອກາດດຽວກັນນີ້ ທ່ານ ປອ ແສນສັກ ໄດ້ກ່າວຂອບໃຈມາຍັງຜູ້ອຳນວຍການໃຫ່ຍ ລຊມລ ພ້ອມຄະນະ ທີ່ໄດ້ສະລະເວລາໃນການມາມອບເງິນພາສີຊັບພະຍາກອນແຮ່ທາດດັ່ງກ່າວໃຫ້ແຂວງ, ການມອບໃນຄັ້ງນີ້ຖືວ່າເປັນການມອບຄັ້ງທຳອິດໃຫ້ແກ່ແຂວງສະຫວັນນະເຂດ, ເຊິ່ງແຂວງຈະເປັນຜູ້ຈັດຕັ້ງປະຕິບັດ ເມື່ອສູນກາງມອບເງິນດັ່ງກ່າວມາໃຫ້ແຂວງເປັນຜູ້ເກັບ ແລະ ບໍລິຫານເອງ ກໍ່ຈະເຮັດໃຫ້ຂະບວນການນຳໃຊ້ເງິນເຂົ້າໃນການພັດທະນາຕ່າງໆພາຍໃນແຂວງກໍ່ຈະສະດວກສະບາຍ ແລະ ວ່ອງໄວຂຶ້ນ. ຈາກນີ້ໄປ, ແຂວງສະຫວັນນະເຂດ ກໍ່ສາມາດເວົ້າໄດ້ວ່າ: ລາຍໄດ້ຫລັກໆຂອງແຂວງເກືອບ 50 % ແມ່ນໄດ້ມາຈາກບໍ່ຄຳ-ທອງເຊໂປນ. ໃນອະນາຄົດ, ອຳນາດການປົກຄອງແຂວງສະຫວັນນະເຂດຈະໃຫ້ການສະໜັບສະໜູນໃຫ້ແກ່ບໍລິສັດ ລຊມລ ຢ່າງເຖິງທີ່ສຸດ. ຫາກມີບັນຫາໃດ ກໍ່ຂໍໃຫ້ທາງບໍລິສັດເຂົ້າມາປຶກສາຫາລື ໄດ້.

ຜ່ານມາ ໃນປີ 2022 ລຊມລ ໄດ້ມອບລາຍຮັບຄ່າພາສີຊັບພະຍາກອນແຮ່ທາດໃຫ້ແກ່ລັດຖະບານ ສປປ ລາວ ເປັນຈຳນວນທັງໝົດ ກວ່າ US$ 20,050,911.38 (ຊາວລ້ານຫ້າສິບພັນເກົ້າຮ້ອຍສິບເອັດ ໂດລາ ສະຫະລັດ) ນັບຕັ້ງແຕ່ເລີ່ມມີການຂຸດຄົ້ນ-ປຸງແຕ່ງ-ແລະ ຜະລິດຄຳ-ທອງ ຕັ້ງແຕ່ປີ 2003 ເປັນຕົ້ນມາ, ບໍລິສັດ ລຊມລ ໄດ້ປະກອບສ່ວນພັນທະທີ່ເປັນລາຍຮັບໂດຍກົງໃຫ້ແກ່ລັດຖະບານລາວ ເປັນເງິນທັງໝົດ US$1,7 ຕື້ ໃນນັ້ນ ມີຄ່າຊັບພະຍາກອນແຮ່ທາດ ຫຼາຍກ່ວາ US$ 389 ລ້ານ. ນອກຈາກນັ້ນບໍລິສັດກໍ່ຍັງໄດ້ລົງທຶນຕື່ມອີກ ຫຼາຍຮ້ອຍລ້ານໂດລາ ສະຫະລັດ ໃສ່ໃນການປະກອບສ່ວນທາງອ້ອມ ເຊັ່ນ: ການຝຶກອົບຮົມສີມືແຮງງານ, ການສະໜັບສະໜູນກຸ່ມທຸລະກິດທ້ອງຖິ່ນ ແລະ ການພັດທະນາຊຸມຊົນເຈົ້າພາບ.





# LXML ເຊໂປນ ສະໜັບສະໜູນອຸປະກອນການຮຽນໃຫ້ແກ່ນັກຮຽນ

ເພື່ອເປັນການບັນລຸໄດ້ 3 ເສົາຫຼັກຂອງແຜນການພັດທະນາຊຸມຊົນຂອງ ບໍລິສັດ ລ້ານຊ້າງ ມິເນໂຣນສ໌ ຈຳກັດ (LXML) ໃຫ້ປາກົດຜົນເປັນຈິງ ແລະ ມີປະສິດພາບ, ໜຶ່ງໃນສາມເສົາຫຼັກນັ້ນກໍ່ຄືການພັດທະນາດ້ານການສຶກສາຂອງເຍົາວະຊົນພາຍໃນເມືອງ ວິລະບູລີ ໃຫ້ໄດ້ມີຄວາມຮູ້ ແລະ ຄວາມສາມາດທີ່ຈຳເປັນ, ພ້ອມທັງເປັນການສ້າງແຮງພັກດັນໃຫ້ເຂົາເຈົ້າໄດ້ສຶກສາຕໍ່ໃນລະດັບທີ່ສູງຂຶ້ນ.

ເມື່ອວັນທີ 22 ກັນຍາ 2023 ຜ່ານມານີ້ ບໍລິສັດ LXML ໄດ້ເຂົ້າຮ່ວມພິທີໄຂສົກຮຽນໃໝ່ ສົກປີ 2023 – 2024 ຢູ່ທີ່ສະໂມສອນຫ້ອງວ່າການເມືອງວິລະບູລີ, ເຂົ້າຮ່ວມເປັນປະທານໂດຍ ທ່ານ ວາລີຍະ ສີຈັນທອງທິບ, ເຈົ້າເມືອງວິລະບູລີ, ທ່ານ ນາງ ທູນທະລາ ໄຊຍະສານ, ຫົວໜ້າຫ້ອງການສຶກສາ ແລະ ກິລາເມືອງ; ມີຄະນະຫ້ອງການ ສຶກສາ ແລະ ກິລາເມືອງ, ມີຄະນະພັດທະນາການສຶກສາຂັ້ນເມືອງ, ອຳນາດການປົກຄອງຂັ້ນບ້ານ, ຜູ້ອຳນວຍການໂຮງຮຽນແຕ່ລະໂຮງຮຽນ, ຫົວໜ້າ-ຄະນະຫ້ອງການອ້ອມຂ້າງເມືອງ, ນ້ອງນັກຮຽນພ້ອມດ້ວຍແຂກຖືກເຊີນເຂົ້າຮ່ວມ.

ໃນໂອກາດດັ່ງກ່າວນີ້ ທາງບໍລິສັດ ລຊມລ ໄດ້ປະກອບສ່ວນ ມອບອຸປະກອນການຮຽນຈຳນວນໜຶ່ງໃຫ້ແກ່ນ້ອງນັກຮຽນ ຊຶ່ງປະກອບມີ: ກະເປົາເປ້, ຄັນຮົ່ມ, ບິກ, ສໍ ແລະ ປື້ມຂຽນ, ທັງໝົດນີ້ ກໍ່ເພື່ອເປັນການຊຸກຍູ້-ສົ່ງເສີມ ໃຫ້ແກ່ບັນດານ້ອງນັກຮຽນ ທີ່ອາໄສຢູ່ໃນ ເຂດອ້ອມຂ້າງ ບໍ່ຄຳ-ທອງເຊໂປນ ເພື່ອສ້າງສິ່ງເອື້ອອຳນວຍໃນການສຶກສາຮໍ່າຮຽນ ແລະ ໃຫ້ເຂົາເຈົ້າມີຄຸນນະພາບຊີວິດທີ່ດີຂຶ້ນ.

LXML ມີຄວາມມຸ່ງໝັ້ນ ທີ່ຈະສະໜັບສະໜູນການສຶກສາຂອງຄົນລຸ້ນຕໍ່ໄປ, ເພາະພວກເຮົາເຊື່ອວ່າ ການສຶກສາແມ່ນພື້ນຖານທີ່ດີໃນອະນາຄົດ ແລະ ພວກເຮົາກໍ່ມີຄວາມພາກພຸມໃຈທີ່ໄດ້ເປັນພາກສ່ວນໜຶ່ງຂອງພາລະກິດອັນສູງສົ່ງນີ້.






# LXML ເຊໂປນ ໄດ້ສະໜອງລູກປາໃຫ້ບ້ານເຂດອ້ອມຂ້າງບໍ່ຄຳ-ທອງເຊໂປນ 85.000 ໂຕ ມູນຄ່າ 34 ລ້ານກີບ



**ກໍລະກົດ** 2023 ນີ້ ຢູ່ທີ່ໜອງສະໃຫຍ່ເມືອງວິລະບູລີ ໄດ້ຈັດພິທີມອບ - ຮັບລູກປາ ແລະ ປ່ອຍລູກປາ ລົງສູ່ແຫຼ່ງນ້ຳ ເຂົ້າຮ່ວມໃນພິທີມີທ່ານ ວາລີຍະ ສີຈັນທອງທິບ ເຈົ້າເມືອງ ວິລະບູລີ, ທ່ານ ສະໝານ ອາເນກາ ຜູ້ອຳນວຍການໃຫຍ່ບໍລິສັດລ້ານຊ້າງ ມິເນໂຣນສ໌ ຈຳກັດ, ມີບັນດາທ່ານໃນຄະນະປະຈຳ, ກຳມະການພັກເມືອງ, ຫົວໜ້າຄະນະຫ້ອງການຕ່າງໆຂອງເມືອງ, ອຳນາດການປົກຄອງບ້ານບຸ່ງຄຳ ແລະ ບ້ານສົບກົງ, ບັນດານັກທຸລະກິດພາຍໃນເມືອງ ພ້ອມດ້ວຍພໍ່ແມ່ປະຊາຊົນເຂົ້າຮ່ວມ. ທ່ານ ຄຳໄສ ອິນທະປັນຍາ ຮອງຫົວໜ້າຫ້ອງການກະສິກຳ ແລະ ປ່າໄມ້ເມືອງວິລະບູລີ ໄດ້ກ່າວລາຍງານວ່າ : ໂດຍປະຕິບັດຕາມແຜນພັດທະນາ ເສດຖະກິດ-ສັງຄົມຂອງເມືອງ ກ່ຽວກັບການຊຸກຍູ້-ສົ່ງເສີມການຜະລິດກະສິກຳ ໃຫ້ຫຼາຍຂຶ້ນ ເພື່ອຂາຍເປັນສິນຄ້າ, ສ້າງລາຍຮັບເພີ່ມໃຫ້ແກ່ພໍ່ແມ່ປະຊາຊົນ ແລະ ທິດຊີ້ນຳຂອງຄະນະນຳເມືອງວິລະບູລີ ກໍ່ຄືຄະນະນຳຂອງບໍລິສັດລ້ານຊ້າງ ມິເນໂຣນສ໌ ກ່ຽວກັບການສ້າງຂະບວນການ ເນື່ອງໃນໂອກາດ ວັນປ່ອຍປາ ແລະ ອະນຸລັກສັດນ້ຳ-ສັດປ່າແຫ່ງຊາດ ວັນທີ 13 ກໍລະກົດ 2023 ກໍ່ຄືແຜນປ່ອຍປາຂອງຫ້ອງການ ກະສິກຳ ແລະ ປ່າໄມ້ເມືອງ ວິລະບູລີ ປະຈຳປີ 2023 ທີ່ໄດ້ວາງອອກນັ້ນ, ພ້ອມນີ້ ກໍ່ຍັງເປັນການສ້າງຂະບວນການ ດ້ານການອະນຸລັກປົກປັກຮັກສາ ແລະ ພັດທະນາ ສັດນ້ຳ - ສັດປ່າ ປະຈຳປີ 2023 ນີ້ ໃຫ້ເປັນຂະບວນການຟົດຟື້ນ, ເພື່ອຕອບສະໜອງການບໍລິໂພກຊີ້ນປາໃຫ້ພຽງພໍຕໍ່ຄວາມຕ້ອງການ, ເພື່ອແນ່ໃສ່ເສີມສ້າງຄວາມອຸດົມສົມບູນ ໃຫ້ແກ່ທຳມະຊາດ, ພູຜາປ່າດົງ, ແຫຼ່ງນ້ຳ, ຫ້ວຍໜອງຄອງບຶງ ແລະ ແມ່ນ້ຳລຳເຊ; ສະນັ້ນ, ທາງຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ພ້ອມທັງພະນັກງານລັດຖະກອນ ແລະ ໜ່ວຍງານທີ່ກ່ຽວຂ້ອງ ໄດ້ເອົາໃຈໃສ່ຫາງຫາກະກຽມ ລະດົມທຶນຮອນຈຳນວນໜຶ່ງເພື່ອຊື້ລູກປາມາປ່ອຍ ເນື່ອງໃນວັນສຳຄັນດັ່ງກ່າວ.

ສຳລັບລູກປາທີ່ທາງບໍລິສັດ ລ້ານຊ້າງ ມິເນໂຣນສ໌ ຈຳກັດ ໄດ້ນຳມາມອບໃຫ້ໃນຄັ້ງນີ້ ແມ່ນນຳລົງປ່ອຍຢູ່ໃນ 2 ຈຸດຄື : ຈຸດໜອງສະໃຫຍ່ຂອງເມືອງ ບ້ານບຸ່ງຄຳ ແລະ ຈຸດຝາຍນ້ຳລົ້ນຫ້ວຍໂກດບ້ານສົບກົງ ລວມມີຈຳນວນທັງໝົດ 200 ຖົງ ເທົ່າກັບ 8,000 ໂຕ ໃນນັ້ນມີປາປາກ 60 ຖົງ, ປາໃນ 60 ຖົງ, ປາກິນຫຍ້າ 60 ຖົງ ແລະ ປານິນ 60 ຖົງ, ໃນນີ້ ແມ່ນສ່ວນໜຶ່ງຂອງຈຳນວນລູກປາ ທີ່ທາງບໍລິສັດ ໄດ້ສະໜອງໃຫ້ບ້ານ ໃນເຂດອ້ອມຂ້າງບໍ່ຄຳ-ທອງເຊໂປນ ຈຳນວນ 14 ບ້ານ ໃນຈຳນວນ 85.000 ໂຕນັ້ນ ຈາກນີ້ ກໍ່ຈະໄດ້ສືບຕໍ່ມອບໃຫ້ແກ່ບ້ານອື່ນອີກຕໍ່ໄປ ຕາມແຜນການ. ໃນປະຈຸບັນທົ່ວເມືອງມີຈຳນວນໜອງປາທັງໝົດ 1,958 ໜອງ ໃນນັ້ນ, ໜອງລວມບ້ານມີ 37 ໜອງ, ໜອງລວມຈຸດສຸມ 03 ໜອງ ແລະ ໜອງຂອງຊາວກະສິກອນ ມີ1,422 ໜອງ, ມີແຜນປ່ອຍປາໃນທົ່ວເມືອງ 1,500,000 ກວ່າໂຕ.





# LXML ເຊໂປນ ສືບຕໍ່ໃຫ້ການສະໜັບສະໜູນທຶນການສຶກສາ ດ້ານເຕັກນິກວິຊາຊີບ ໃຫ້ແກ່ຊຸມຊົນອ້ອມຂ້າງເຂດການດຳເນີນງານ ຂອງ ບໍ່ຄຳ-ທອງ ເຊໂປນ

**ກັນຍາ** 2023 ທີ່ ວິທະຍາໄລເຕັກນິກ ລາວ-ເຢຍລະມັນ, ນະຄອນຫຼວງວຽງຈັນ, ບໍລິສັດ ລ້ານຊ້າງ ມິເນໂຣນສ໌ ຈຳກັດ (ລຊມລ) ໄດ້ເຂົ້າຮ່ວມການນຳສະເໜີ ນ້ອງນັກຮຽນຝຶກງານໃໝ່ ຈຳນວນ 18 ນ້ອງ ຈາກໂຮງຮຽນ ມັດທະຍົມສົມບູນ ເມືອງວິລະບູລີ ເພື່ອເຂົ້າຮ່ວມໂຄງການນັກຮຽນຊ່າງເຕັກນິກ ເລີ່ມແຕ່ປີ 2023-2027. ໂດຍການເປັນປະທານຂອງ ທ່ານ ສະໝານ ອະເນກາ, ຜູ້ອຳນວຍການໃຫຍ່ ລຊມລ ແລະ ທ່ານ ຄຳສະໄຫວ ຍ່ອມມີລາວົງ, ຜູ້ອຳນວຍການວິທະຍາໄລເຕັກນິກ ລາວ-ເຢຍລະມັນ ພ້ອມດ້ວຍພະນັກງານວິຊາການອາວຸໂສຈາກ ລຊມລ, ຄູ-ອາຈານ ແລະ ບັນດາຜູ້ຊ່ຽວຊານຈາກວິທະຍາໄລວິທະຍາໄລເຕັກນິກ ລາວ-ເຢຍລະມັນ.

ໂຄງການນັກຮຽນຊ່າງເຕັກນິກ ປີ 2023-2027 ແມ່ນສືບເນື່ອງມາຈາກບົດບັນທຶກຄວາມເຂົ້າໃຈ (MoU) ໄລຍະ 3 ປີ ທີ່ສອງຝ່າຍໄດ້ລົງນາມຮ່ວມກັນໃນກາງປີ 2022. ຄູສອນຊ່ຽວຊານ-ວິຊາຊີບຂອງ ວິທະຍາໄລເຕັກນິກ ລາວ-ເຢຍລະມັນ ໄດ້ອະທິບາຍເຖິງຄວາມຄືບໜ້າ ແລະ ການເຄື່ອນໄຫວໃນການຝຶກຫັດຂອງນ້ອງນັກຮຽນ 18 ນ້ອງທຳອິດໃນປີ 2022. ບົດຮຽນສຳຄັນທີ່ຖອດຖອນໄດ້ຈາກການສົນທະນາໃນຄັ້ງນີ້ຈະນຳໄປໝູນໃຊ້ໃນການປັບປຸງນັກຮຽນກຸ່ມ 2 ໃຫ້ດີກວ່າເກົ່າ, ພ້ອມທັງນຳເອົາບັນຫາ ຫຼື ຂໍ້ສະເໜີຈາກ ທາງວິທະຍາໄລ ແລະ ບໍລິສັດ ນຳໄປປະຕິບັດໃຫ້ໄດ້ຮັບໝາກຜົນດີກວ່າເກົ່າຕື່ມອີກ.

ໂຄງການດັ່ງກ່າວໄດ້ປະກອບມີການຝຶກອົບຮົມງານດ້ານເຕັກນິກວິຊາຊີບພາກທິດສະດີ ແລະ ພາກປະຕິບັດ ຢູ່ໂຮງຮຽນ ແລະ ການລົງຝຶກວຽກຕົວຈິງຢູ່ພາກສະໜາມຂອງ ບໍ່ຄຳ-ທອງ ເຊໂປນ. ໃນລະຫວ່າງປີ 2015 ຫາ 2018 ຜ່ານມາ, ມີນ້ອງນັກຮຽນຝຶກງານ 18 ຄົນ ທີ່ຮຽນຈົບຫຼັກສູດ 5 ປີ ໄດ້ຮັບໃບປະກາສະນີຍະບັດຂັ້ນ III ຂອງປະເທດອົດສະຕຣາລີ ແລະ ເຕັກນິກວິຊາຊີບຊັ້ນສູງຂອງລາວໃນດ້ານເຕັກນິກວິຊາຊີບ. ນັກສຶກສາທີ່ຈົບການສຶກສາແມ່ນໄດ້ຮັບທັກສະອັນລໍ້າຄ່າເພື່ອນຳໄປປະກອບສ່ວນເຂົ້າໃນການພັດທະນາວຽກງານຂອງເຂົາເຈົ້າ ຢູ່ທັງໃນ ສປປ ລາວ ແລະ ຕ່າງປະເທດ.

ທ່ານ ສະໝານ ໄດ້ກ່າວວ່າ "ລຊມລ ມີຄວາມພາກພູມໃຈຫຼາຍທີ່ໄດ້ໃຫ້ການສະໜັບສະໜູນການຝຶກອົບຮົມວິຊາຊີບທີ່ມີຄຸນວຸດທິໃຫ້ແກ່ນ້ອງນັກຮຽນພາຍໃນຊຸມຊົນເມືອງວິລະບູລີ ແລະ ສ້າງຊີວິດການເປັນຢູ່ທີ່ດີຂຶ້ນໃຫ້ແກ່ຄົນລຸ້ນຫຼັງ, ຄວາມສາມາດ ແລະ ປະສົບການທີ່ໄດ້ຮຽນຮູ້ຂອງນັກຮຽນຜູ້ທີ່ໄດ້ເຂົ້າຮ່ວມໂຄງການ ຈະປະກອບສ່ວນເຂົ້າໃນການດຳເນີນງານຂອງເມືອງເຊໂປນ ແລະ ປະເທດລາວ."

ນັບຕັ້ງແຕ່ເລີ່ມດຳເນີນງານໃນປີ 2003, ລຊມລ ໄດ້ລົງທຶນຫຼາຍລ້ານໂດລາສະຫະລັດ ໃສ່ການຝຶກອົບຮົມ, ໃຫ້ທຶນການສຶກສາ, ຊ່າງສີມື, ນັກຮຽນ ແລະ ນັກສຶກສາຝຶກງານ. ນັກສຶກສາຫຼາຍກວ່າ 105 ຄົນ ສຳເລັດການສຶກສາຈາກໂຄງການນັກສຶກສາຊ່າງສີມື ແລະ 36 ຄົນ ສຳເລັດການສຶກສາລະດັບອາຊີບຈາກຕ່າງປະເທດດ້ວຍທຶນການສຶກສາຂັ້ນສູງ.

ມາຮອດເດືອນມິຖຸນາ 2022, ລຊມລ ໄດ້ສະໜອງງົບປະມານ ແລະ ເວລາການຝຶກອົບຮົມ 23,000 ຊົ່ວໂມງ ໃຫ້ແກ່ພະນັກງານລາວ ໂດຍຜ່ານການຝຶກອົບຮົມທັງພາຍໃນ ແລະ ພາຍນອກ, ໃນສະຖານທີ່ເຮັດວຽກ ແລະ ໄປສຶກສາຢູ່ຕ່າງປະເທດ. ໃນເຄິ່ງປີທີ່ສອງຂອງ ປີ 2022 ລຊມລ ໄດ້ຟື້ນຟູບັນດາໂຄງການພັດທະນາຜູ້ຄຸມງານ ແລະ ທັກສະຄວາມເປັນຜູ້ນຳທີ່ສຳຄັນ ເພື່ອສະໜັບສະໜູນຄວາມເປັນມືອາຊີບໃຫ້ແກ່ນັກວິຊາການດ້ານບໍ່ແຮ່ຂອງລາວທີ່ເປັນລຸ້ນສືບທອດ.

ນັບຕັ້ງແຕ່ເລີ່ມການດຳເນີນງານໃນປີ 2003 ເປັນຕົ້ນມາ, ບໍ່ຄຳທອງ-ເຊໂປນ ໄດ້ປະກອບສ່ວນ ສ້າງລາຍຮັບໂດຍກົງຈາກພາສີ, ຄ່າພາກຫຼວງ ແລະ ເງິນປັນຜົນໃຫ້ແກ່ລັດຖະບານລາວ ຫຼາຍກວ່າ 1,7 ຕື້ໂດລາສະຫະລັດ. ນອກນີ້, ຍັງໄດ້ສະໜອງຜົນປະໂຫຍດທາງອ້ອມທີ່ສຳຄັນໂດຍຜ່ານການຈ້າງງານ, ສ້າງວຽກເຮັດງານທຳໃຫ້ຊຸມຊົນທ້ອງຖິ່ນຫຼາຍກວ່າ 5,000 ຄົນ.

ລຊມລ ເປັນໜຶ່ງໃນຄວາມເປັນເລີດດ້ານບໍ່ແຮ່ ໃນ ສປປ ລາວ ເຮັດໃຫ້ ລຊມລ ໄດ້ຮັບການຍ້ອງຍໍໃນຖານະເປັນວິສາຫະກິດກຽດຕິສັກ ໃນຂັ້ນ A+ ທີ່ໄດ້ຮັບກິດຕິມະສັກຈາກລັດຖະບານລາວມາເປັນເວລາກວ່າ 10 ປີ ແລະ ບໍລິສັດກໍ່ໄດ້ຮັບລາງວັນຍ້ອງຍໍດີເດັ່ນຫຼາຍຢ່າງ ຂອງການປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ, ດ້ານວຽກງານສຸຂະພາບ, ຄວາມປອດໄພ ແລະ ການປົກປັກຮັກສາສິ່ງແວດລ້ອມ. ບໍລິສັດ ລ້ານຊ້າງ ມິເນໂຣນສ໌ ຈຳກັດ ຍັງຄົງໃຫ້ຄວາມສຳຄັນໃນການສະໜັບສະໜູນໃຫ້ທຶນການສຶກສາດ້ານເຕັກນິກວິຊາຊີບ ໃຫ້ແກ່ຊຸມຊົນທ້ອງຖິ່ນກໍ່ຄືເມືອງວິລະບູລີ. ລຊມລ ຍັງຄົງອຸທິດຕົນເພື່ອການປະຕິບັດການຂຸດຄົ້ນບໍ່ແຮ່ຢ່າງມີຄວາມຮັບຜິດຊອບ ແລະ ສະໜັບສະໜູນການພັດທະນາໃນຖານະຄູ່ຮ່ວມງານທີ່ມີຄຸນຄ່າຕໍ່ປະເທດລາວ.



# LXML ເຊໂປນ ມອບຫໍພິພິຕະພັນກາງແຈ້ງ ຂຸມຂຸດຄົ້ນຈຳລອງຍຸກຫີນໃໝ່ 6,000-4,000 ປີກ່ອນ ໃຫ້ແກ່ຊາວບ້ານນ້ຳປະເຄນ





**ຕຸລາ** 2023 ທີ່ ແຂວງສະຫວັນນະເຂດ, ບໍລິສັດ ລ້ານຊ້າງ ມິເນໂຣນສ໌ ຈຳກັດ ໄດ້ມອບຫໍພິພິຕະພັນກາງແຈ້ງ ຂຸມຂຸດຄົ້ນຈຳລອງຍຸກຫີນໃໝ່ ອາຍຸ 6,000-4,000 ປີກ່ອນ ເພື່ອເປັນບ່ອນວາງສະແດງການຂຸດຄົ້ນທາງບູຮານວິທະຍາ ໃຫ້ປະຊາຊົນ ບ້ານນ້ຳປະເຄນ ເມືອງວິລະບູລີ ແຂວງສະຫວັນນະເຂດ, ຫໍດັ່ງກ່າວແມ່ນໄດ້ສ້າງຂຶ້ນພາຍໃຕ້ກອງທຶນພັດທະນາທ້ອງຖິ່ນ (Trust Fund) ທີ່ໃຫ້ການສະໜັບສະໜູນໂດຍ ບໍລິສັດ ລ້ານຊ້າງ ມິເນໂຣນສ໌ ຈຳກັດ. ການມອບ-ຮັບ ຫໍພິພິຕະພັນດັ່ງກ່າວ ແມ່ນເພື່ອເປັນບ່ອນອີງໃຫ້ແກ່ເມືອງວິລະບູລີ ໂດຍສະເພາະທາງດ້ານວັດທະນະທຳ-ບູຮານຄະດີ ຊຶ່ງຈະເປັນສິ່ງດຶງດູດນັກທ່ອງທ່ຽວທັງຄົນລາວ ແລະ ຕ່າງປະເທດຈາກທົ່ວທຸກມຸມໂລກເຂົ້າມາທ່ຽວຊົມ ແລະ ຮຽນຮູ້ປະຫວັດຄວາມເປັນມາຂອງຊາວ ບູຮານສະໄໝຍຸກຫີນໃໝ່ໃນຂົງເຂດນີ້.

ຫໍພິພິທະພັນໄດ້ເລີ່ມກໍ່ສ້າງຕັ້ງແຕ່ວັນທີ 20/12/2022 – 10/06/2023 ສຳເລັດ ມີຂະໜາດຕົວອາຄານ ກ້ວາງ 4 ແມັດ, ຍາວ 4 ແມັດ 70 ຊມ, ແລະ ສູງ 4 ແມັດ 30 ຊມ ອາຄານເຮັດດ້ວຍປູນຊີມັງ, ເຫຼັກ, ແກ້ວ ແລະ ຫລັງຄາມຸງດ້ວຍແຜ່ນອາລູຊິງ, ລວມມູນຄ່າການກໍ່ສ້າງທັງໝົດ 244.253,280 ກີບ.

ພິທີມອບ-ຮັບໃນຄັ້ງນີ້ ມີບັນດາການນຳຜູ້ຕາງໜ້າທີ່ສຳຄັນຈາກທາງບໍລິສັດ ແລະ ພາກລັດ ເຂົ້າຮ່ວມ ເຊັ່ນ: ທ່ານ ສະໝານ ອະເນກາ ຜູ້ອຳນວຍການໃຫຍ່ ລຊມລ ແລະ ທ່ານ ວາລີຍະ ສີຈັນທອງທິບ ເຈົ້າເມືອງວິລະບູລີ, ທ່ານ ປອ. ທອງລິດ ຫຼວງໂຄດ ຮອງຫົວໜ້າກົມມໍລະດົກ, ທ່ານ ມົງກຸດເພັດ ວົງພະຈັນ, ຮອງຫົວໜ້າພະແນກຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ກະຊວງຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ມີພະນັກງານວິຊາການຈາກທາງບໍລິສັດ, ຜູ້ຕາງໜ້າຈາກພາກລັດ, ອຳນາດການປົກຄອງບ້ານນ້ຳປະເຄນ ພ້ອມດ້ວຍປະຊາຊົນເຂົ້າຮ່ວມ.

ໃນໂອກາດນີ້ ທ່ານ ສະໝານ ໄດ້ສະແດງຄຳຄິດເຫັນຕໍ່ພິທີການມອບ-ຮັບ ດັ່ງກ່າວວ່າ: "ຂ້າພະເຈົ້າຍັງເຊື່ອໝັ້ນວ່າ ບໍລິສັດ ລຊມລ ຈະໄດ້ຮັບການຮ່ວມມືທີ່ດີຈາກພາກລັດທີ່ກ່ຽວຂ້ອງ ໃນການດຳເນີນການຂຸດຄົ້ນບໍ່ແຮ່ ໃຫ້ໄດ້ບັນລຸຕາມເປົ້າໝາຍ ແລະ ທາງບໍລິສັດກໍ່ຈະສືບຕໍ່ສະໜັບສະໜູນໃຫ້ແກ່ວຽກງານດ້ານມໍລະດົກ-ວັດທະນະທຳ ໂດຍການຮ່ວມມືກັບເມືອງວິລະບູລີ, ແຂວງ ແລະ ກົມມໍລະດົກ ຂອງກະຊວງຖະແຫຼງຂ່າວວັດທະນະທຳ ແລະ ທ່ອງທ່ຽວ, ຄືດັ່ງທີ່ຜ່ານມາ."

ລຊມລ ມີຄວາມພາກພູມໃຈທີ່ໄດ້ສະໜັບສະໜູນໂຄງການນີ້ ແລະ ໄດ້ປະກອບສ່ວນເຂົ້າໃນການອະນຸລັກມໍລະດົກວັດທະນະທຳ. ຫໍພິພິຕະພັນແຫ່ງນີ້ ຈະເປັນຊັບພະຍາກອນທີ່ມີຄຸນຄ່າໃຫ້ແກ່ຊຸມຊົນທ້ອງຖິ່ນ ແລະ ນັກທ່ອງທ່ຽວ, ຊຶ່ງເປັນບ່ອນສາທິດໃຫ້ຄົນມີຄວາມເຂົ້າໃຈກ່ຽວກັບປະຫວັດສາດອັນດີງາມຂອງພື້ນທີ່ແຫ່ງນີ້. ປັດຈຸບັນນີ້ ຫໍດັ່ງກ່າວ ແມ່ນໄດ້ເປີດໃຫ້ສາທາລະນະຊົນ ໄດ້ທ່ຽວຊົມ ແລະ ຄາດວ່າຈະດຶງດູດນັກທ່ອງທ່ຽວຈາກພາຍໃນ ແລະ ທົ່ວໂລກ ຜູ້ທີ່ມີຄວາມສົນໃຈ ທີ່ຈະຮຽນຮູ້ເພີ່ມເຕີມກ່ຽວກັບປະຫວັດສາດທີ່ໜ້າສົນໃຈຂອງພື້ນທີ່ນີ້.

ທ່ານ ປອ. ທອງລິດ ຫຼວງໂຄດ, ຮອງຫົວໜ້າກົມມໍລະດົກ ໄດ້ສະແດງຄວາມຮູ້ບຸນຄຸນ ແລະ ຂອບໃຈ ຢ່າງຈິງໃຈມາຍັງ ບໍລິສັດ ລຊມລ ທີ່ໄດ້ໃຫ້ການຮ່ວມມື ແລະ ອະນຸຍາດໃຫ້ທີມງານລັດຖະບານໄດ້ລົງເຮັດວຽກຢ່າງໃກ້ຊິດຢູ່ພາກສະໜາມ. ທ່ານໄດ້ຮັບຮູ້ເຖິງຄວາມພະຍາຍາມຂອງ ລຊມລ ໃນການເອົາໃຈໃສ່ ແລະ ຮ່ວມມືທີ່ດີໃນການເຮັດວຽກເພື່ອຮັກສາມໍລະດົກວັດທະນະທຳ ເຊິ່ງເປັນການສະຫນັບສະຫນູນປະຫວັດສາດທີ່ແທ້ຈິງຂອງເມືອງວິລະບູລີ ແລະ ກໍ່ເປັນສ່ວນໜຶ່ງທີ່ມີຄວາມສຳຄັນໃນດ້ານວັດຖຸບູຮານຂອງປະເທດລາວ.






# LXML ເຊໂປນ ສືບຕໍ່ການເປັນສະມາຊິກກິດຕິມະສັກ ທີ່ຍາວນານ ຂອງ ສຄອຊ




ບໍລິສັດ LXML ບໍ່ຄຳ-ທອງ ເຊໂປນ ໄດ້ໃຫ້ການສະໜັບສະໜູນເງິນຈຳນວນ 80,000,000 ກີບ ໃນນາມສະມາຊິກຜູ້ຊົງຄຸນວຸດທິ VVIP ຂອງ ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ (LNCCI) ເພື່ອສ້າງຄວາມເຂັ້ມແຂງໃຫ້ LNCCI ແລະ ຊ່ວຍສົ່ງເສີມພັດທະນາຂີດຄວາມສາມາດຂອງພາກທຸລະກິດໃນ ສປປ ລາວ. ການມອບຮັບໃນຄັ້ງນີ້ແມ່ນໄດ້ຈັດຂຶ້ນໃນວັນທີ 23 ສິງຫາ 2023 ຢູ່ທີ່ ຫ້ອງການ ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ (LNCCI). ຕາງໜ້າ ມອບໂດຍ ທ່ານ ສະໝານ ອະເນກາ, ຜູ້ອຳນວຍການໃຫຍ່ ບໍລິສັດ ລ້ານຊ້າງ ມິເນໂຣນສ໌ ຈຳກັດ ແລະ ຮັບໂດຍທ່ານ ດາວວອນ ພະຈັນທະວົງ, ຮອງປະທານສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ.

ໃນໂອກາດດັ່ງກ່າວ, ທ່ານ ສະໝານ ອະເນກາ ຍັງໄດ້ລາຍງານໃຫ້ ທ່ານ ດາວວອນ ກ່ຽວກັບສາຍພົວພັນການຮ່ວມມືທີ່ດີ ລະຫວ່າງ LNCCI ແລະ LXML ບໍ່ຄຳ-ທອງ ເຊໂປນ ຕະຫຼອດໄລຍະຜ່ານມາ ຊຶ່ງທາງທີມງານ LXML ກັບບໍລິສັດແມ່ Chifeng ຂຸດຄົ້ນຄຳ ແມ່ນໄດ້ສົ່ງເສີມການພັດທະນາຊຸມຊົນໃຫ້ມີປະສິດທິພາບສູງສຸດ. ການມີສ່ວນຮ່ວມຈາກປະຊາຊົນທ້ອງຖິ່ນ, ຊຸມຊົນເຈົ້າພາບທີ່ອາໄສຢູ່ໃນເຂດໂຄງການ ບໍ່ຄຳ-ທອງ ເຊໂປນໄດ້ຮັບຜົນປະໂຫຍດຢ່າງຕໍ່ເນື່ອງ ໂດຍສະເພາະແມ່ນ ຄວາມປອດໄພດ້ານສະບຽງອາຫານໂດຍຜ່ານລະບົບການກະສິກຳ ແລະ ຊົນລະປະທານ ທີ່ດີ, ໂຄງການການສຶກສາ ແລະ ສຸຂະພາບຊຸມຊົນ, ລວມທັງແຜນການໂຄງການໃນອະນາຄົດທີ່ແນ່ໃສ່ການປັບປຸງຊີວິດການເປັນຢູ່ຂອງຊຸມຊົນທ້ອງຖິ່ນ.

ທ່ານ ສະໝານ ໄດ້ເນັ້ນໜັກເຖິງຄວາມສຳຄັນຂອງການຊ່ວຍເຫຼືອ ແລະ ການມີສ່ວນຮ່ວມຕໍ່ກັບສະມາຊິກຊຸມຊົນ ແລະ ພາກສ່ວນທີ່ກ່ຽວຂ້ອງເພື່ອຮັບປະກັນວ່າສຽງຂອງເຂົາເຈົ້າໄດ້ຍິນ ແລະ ຄວາມຕ້ອງການຂອງເຂົາເຈົ້າໄດ້ຮັບການແກ້ໄຂ. ທ່ານຍັງໄດ້ເນັ້ນໜັກເຖິງຄວາມຈຳເປັນຂອງການປະຕິບັດການພັດທະນາແບບຍືນຍົງ ທີ່ຫຼຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສົ່ງເສີມການເຕີບໂຕທາງດ້ານເສດຖະກິດໃນໄລຍະຍາວຂອງຊຸມຊົນເຈົ້າພາບ ແລະ ປະເທດລາວ.

ນັບຕັ້ງແຕ່ເລີ່ມການດຳເນີນງານໃນປີ 2003 ເປັນຕົ້ນມາ, ບໍ່ຄຳທອງ-ເຊໂປນ ໄດ້ຜະລິດຄຳຫຼາຍກວ່າ 1,5 ລ້ານອອນສ໌ ແລະ ທອງແດງ 1,1 ລ້ານໂຕນ, ສ້າງລາຍຮັບໂດຍກົງຈາກພາສີ, ຄ່າພາກຫຼວງ ແລະ ເງິນປັນຜົນໃຫ້ແກ່ລັດຖະບານລາວ ຫຼາຍກວ່າ 1,7 ຕື້ໂດລາສະຫະລັດ. ນອກນີ້, ຍັງໄດ້ສະຫນອງຜົນປະໂຫຍດທາງອ້ອມທີ່ສຳຄັນໂດຍຜ່ານການຈ້າງງານ, ການຝຶກອົບຮົມ, ການພັດທະນາຊຸມຊົນ ແລະ ການຈ່າຍເງິນໃຫ້ກັບຄູ່ຄ້າທຸລະກິດທ້ອງຖິ່ນ ແລະ ຜູ້ສະຫນອງ. ໂຄງການພັດທະນາຊຸມຊົນຂອງບໍ່ຄຳ-ທອງ ເຊໂປນ ໄດ້ມອບໂຄງການ ແລະ ການລົງທຶນລວມມູນຄ່າ 20 ລ້ານໂດລາສະຫະລັດ, ສ້າງຜົນປະໂຫຍດໃຫ້ແກ່ປະຊາຊົນໃນເມືອງວິລະບູລີ ຫຼາຍກວ່າ 40,000 ຄົນ, ໃນຂະນະທີ່ກຸ່ມທຸລະກິດທ້ອງຖິ່ນໄດ້ຮັບລາຍຮັບຈາກຊຸມຊົນ 50 ລ້ານໂດລາສະຫະລັດ.

ຄວາມມຸ່ງໝັ້ນຂອງ LXML ໃນຄວາມເປັນເລີດດ້ານບໍ່ແຮ່ ເຮັດໃຫ້ LXML ໄດ້ຮັບການຍ້ອງຍໍໃນຖານະເປັນວິສາຫະກິດກຽດຕິສັກ ໃນຂັ້ນ A+ ທີ່ໄດ້ຮັບກິດຕິມະສັກຈາກລັດຖະບານລາວມາເປັນເວລາກວ່າ 10 ປີ ແລະ ບໍລິສັດກໍ່ໄດ້ຮັບລາງວັນຍ້ອງຍໍດີເດັ່ນຫຼາຍຢ່າງ ໃນການປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງ ສປປ ລາວ. ໃນນັ້ນ, ລວມມີລາງວັນຜູ້ນຳດ້ານທຸລະກິດລາວ 2023 ທີ່ໄດ້ຮັບການຍອມຮັບວ່າເປັນບໍລິສັດຊັ້ນນຳທີ່ສອດຄ່ອງກັບມາດຕະຖານດ້ານສິ່ງແວດລ້ອມສາກົນ, ລາງວັນຜູ້ນຳທຸລະກິດດີເດັ່ນ 2021 ສຳລັບການປ້ອງກັນພະຍາດໂຄວິດ-19 ໃນລາວ, ລາງວັນທຸລະກິດອາຊຽນ 2020 ເພື່ອຕ້ານພະຍາດໂຄວິດ-19, ລາງວັນແຮ່ທາດອາຊຽນ ໃນປີ 2019 ແລະ 2017, ລາງວັນອາຊຽນ ສຳລັບຄວາມເປັນເລີດດ້ານການຂຸດຄົ້ນບໍ່ແຮ່ ແລະ ລາງວັນອາຊຽນສຳລັບການພັດທະນາແບບມີຄວາມຮັບຜິດຊອບຕໍ່ສັງຄົມ ໃນປີ 2016.

ບໍລິສັດ LXML ບໍ່ຄຳທອງ-ເຊໂປນ ພວມກະກຽມສະເຫຼີມສະຫຼອງການຂຸດຄົ້ນບໍ່ແຮ່ ຄົບຮອບ 20 ປີ ໃນເດືອນພະຈິກນີ້, ທັງນີ້ກໍ່ເພື່ອເປັນສະແດງເຖິງຜົນສຳເລັດທີ່ໄດ້ຮັບຕະຫຼອດໄລຍະຜ່ານມາ, ເພື່ອຈາລຶກເຖິງການປະກອບສ່ວນຢ່າງຕັ້ງໜ້າຂອງພະນັກງານ, ຄູ່ຮ່ວມງານ ແລະ ພາກສ່ວນທີ່ກ່ຽວຂ້ອງ ແລະ ເສີມສ້າງຄວາມມຸ່ງໝັ້ນ ໃນການປະຕິບັດການຂຸດຄົ້ນບໍ່ແຮ່ຢ່າງມີຄວາມຮັບຜິດຊອບ ແລະ ຍືນຍົງ.

LXML ຍັງຄົງອຸທິດຕົນເພື່ອການປະຕິບັດການຂຸດຄົ້ນບໍ່ແຮ່ຢ່າງມີຄວາມຮັບຜິດຊອບ ແລະ ສະໜັບສະໜູນການພັດທະນາໃນຖານະຄູ່ຮ່ວມງານທີ່ມີຄຸນຄ່າຕໍ່ປະເທດລາວ.



# LXML ເຊໂປນ ສະໜັບສະໜູນທຶນ ສ້ອມແປງເສັ້ນທາງ ພາຍໃນແຂວງສະຫວັນນະເຂດ

ເມື່ອບໍ່ດົນມານີ້, ບໍລິສັດ ລ້ານຊ້າງ ມິເນໂຣນສ໌ ຈຳກັດ (LXML Sepon) ໄດ້ເຂົ້າຮ່ວມພິທີມອບ-ຮັບ ໂຄງການສ້ອມແປງເສັ້ນທາງ RR629 ແຕ່ບ້ານເມືອງຫຼວງ-ບ້ານນາທອຍ-ບ້ານວັງທ່າຄວາຍ, ເມືອງ ວິລະບູລີ, ແຂວງສະຫວັນນະເຂດ ຊຶ່ງມີຄວາມຍາວທັງໝົດ 7.8 ກິໂລແມັດ, ກວ້າງ 5 ແມັດ. ມີມູນຄ່າກໍ່ສ້າງທັງໝົດ US$22,000 ຊຶ່ງທຶນທັງໝົດ ສະໜັບສະໜູນໂດຍກອງທຶນພັດທະນາທ້ອງຖິ່ນ (Trust Fund) ຂອງ ບໍລິສັດ LXML ບໍ່ຄຳ-ທອງ ເຊໂປນ, ເຂົ້າຮ່ວມໃນພິທີມອບຮັບໂຄງການດັ່ງກ່າວມີ ທ່ານ ວາລີຍະ ສີຈັນທອງທິບ, ເຈົ້າເມືອງ ວິລະບູລີ, ທ່ານ ຫົວໜ້າຫ້ອງການໂຍທາທິການ ແລະ ຂົນສົ່ງເມືອງ, ທ່ານ ສະໝານ ອະເນກາ, ຜູ້ອຳນວຍການໃຫຍ່ LXML ພ້ອມດ້ວຍພະນັກງານວິຊາການຈາກທາງບໍລິສັດ, ພາກລັດ, ຕາງໜ້າບໍລິສັດຜູ້ຮັບເໝົາ, ອຳນາດການປົກຄອງບ້ານ ແລະ ປະຊາຊົນເຂົ້າຮ່ວມ.

ໂຄງການສ້ອມແປງເສັ້ນທາງດິນແດງ ເສັ້ນທາງນ້ຳເບີ RR6429 ດັ່ງກ່າວແມ່ນຮັບເໝົາກໍ່ສ້າງໂດຍ ບໍລິສັດ ຄຸນມີໄຊ ກໍ່ສ້າງຂົວທາງ ຈຳກັດຜູ້ດຽວ, ໄລຍະການຈັດຕັ້ງປະຕິບັດ ແລະ ການດຳເນີນໂຄງການ ເລີ່ມແຕ່ວັນທີ 01 ພຶດສະພາ ຫາວັນທີ 08 ມິຖຸນາ 2023 ແມ່ນໄດ້ສ້ອມແປງສຳເລັດ. ການສ້ອມແປງເສັ້ນທາງຄັ້ງນີ້ ເປັນການສ້າງຜົນປະໂຫຍດທີ່ດີ ໃຫ້ແກ່ປະຊາຊົນທຸກຄົນທີ່ນຳໃຊ້ເສັ້ນທາງສາຍນີ້ ໂດຍສະເພາະແມ່ນພໍ່ແມ່ປະຊາຊົນບ້ານເມືອງຫຼວງ, ບ້ານແກ້ງເກົາ, ບ້ານນາທອຍ ແລະ ບ້ານວັງທ່າຄວາຍ ເພື່ອເອື້ອອຳນວຍຄວາມສະດວກໃນການໄປມາຫາສູ່ກັນ ແລະ ທຳມະຫາກິນໃນການດຳລົງຊີວິດ ໃຫ້ມີຄວາມສະດວກສະບາຍ ແລະ ວ່ອງໄວຂຶ້ນກວ່າເກົ່າ. ໃນໂອກາດດັ່ງກ່າວນີ້




ທ່ານ ສະໝານ ອະເນກາ ຍັງໄດ້ນຳເອົາເບ້ຍໄມ້ ຊຶ່ງປະກອບມີ: ເບ້ຍຊາ, ເບ້ຍໝາກຖົ່ວ, ເບ້ຍໝາກຂາມ ແລະ ເບ້ຍໝາກໝັ້ນ ລວມຈຳນວນ 200 ກວ່າເບ້ຍ ມອບໃຫ້ແກ່ອຳນາດການປົກຄອງບ້ານນາທອຍ ເພື່ອນຳໄປແຈກຢາຍໃຫ້ປະຊາຊົນພາຍໃນບ້ານ ໄດ້ນຳໄປປູກເພື່ອເອົາແນວພັນໃນປີຕໍ່ໄປ.

ນັບຕັ້ງແຕ່ເລີ່ມດຳເນີນງານມາຕັ້ງແຕ່ປີ 2003 ເປັນຕົ້ນມາ, LXML ໄດ້ລົງທຶນຫຼາຍກວ່າ US$55 ລ້ານ ໃສ່ໃນການປັບປຸງພື້ນຖານໂຄງລ່າງ ພາຍໃນເມືອງ ວິລະບູລີ, ໃນນັ້ນ US$34 ລ້ານ ເພື່ອສ້າງຕາຂ່າຍໄຟຟ້າ ຈາກເມືອງທ່າແຂກ ຫາ ເມືອງມະຫາໄຊ, US$20 ລ້ານ ເພື່ອສ້າງ ແລະ ບຳລຸງຮັກສາເສັ້ນທາງທ້ອງຖິ່ນ ແລະ US$5 ລ້ານ ເພື່ອປັບປຸງ - ຍົກລະດັບເສັ້ນທາງ 28A.

## ຕົວເລກ ແລະ ຂໍ້ມູນ ທີ່ສຳຄັນ ຂອງ ບໍ່ຄຳ-ທອງເຊໂປນ

### ການພັດທະນາຄວາມສາມາດ

- US$4 ລ້ານ ທຶນການສຶກສາຂັ້ນສານ ໃຫ້ແກ່ພະນັກງານລາວ
- US$0.68 ລ້ານ ສະໜັບສະໜູນອຸປະກອນຝຶກອົບຮົມ ແກ່ໂຮງຮຽນວິຊາຊີບ ສະຫວັນນະເຂດ
- 48.132 ຊມ ການຝຶກອົບຮົມ/ປີ
- ໂຄງການຝຶກອົບຮົມຂີດຄວາມສາມາດໃນພາກສະໜາມ (ຄູຝຶກ, ການຝຶກອົບຮົມທາງການ ແລະ ຄຽງຄູ່ກັບການປະຕິບັດງານ)
- 36 ນັກຮຽນການຊ່າງ ກຳລັງສຶກສາຢູ່ ວິທະຍາໄລ ລາວ - ເຢຍລະມັນ 2022-2026

### ຊຸມຊົນ

- US$56 ລ້ານ – ເກັບກູ້ LXML UXO (60.000 ລູກ ແລະ ໃນພື້ນທີ່ 56.400ຮຕ)*
- US$55,8 ລ້ານ – ລາຍຮັບ ຈາກການພັດທະນາທຸລະກິດຊຸມຊົນ*
- US$13,2 ລ້ານ – ກອງທຶນພັດທະນາທ້ອງຖິ່ນ*
- US$3.2 ລ້ານ – ກອງທຶນພັດທະນາບ້ານ - (2010 -2018)
- US$170 ພັນ – ກອງທຶນຊຸກຍູ້ຊີວິດການເປັນຢູ່ໃຫ້ແກ່ກຸ່ມຜູ້ດ້ອຍໂອກາດ - FADG (2019 - ຮອດປັດຈຸບັນ)
- US$1.8 ລ້ານ – ອານຸລັກມໍລະດົກວັດທະນະທຳແຫ່ງຊາດ ໂດຍຜ່ານແຜນງານຄົ້ນຄວ້າບູຮານວິທະຍາ

### ຊຸມຊົນ

- US$2.9 ລ້ານ – ໃຫ້ແກ່ລັດທະບານລາວ, LXML - ຢູນິເຊບ, ໂຄງການ 1000 ວັນ (2012 - ຮອດປັດຈຸບັນ)

### ພະນັກງານ

- ພະນັກງານ LXML 2,055 ຄົນ (95% ຄົນລາວ)
- ພະນັກງານຄົນລາວ 1.914 ຄົນ
- ຕ່າງປະເທດ 141 ຄົນ
- ຜູ້ຮັບເໝົາລາວ 2.106 ຄົນ
- ຜູ້ຮັບເໝົາຕ່າງປະເທດ 88 ຄົນ

### TAX ຜົນປະໂຫຍດແກ່ ສປປ ລາວ

- US$1.7 ຕື້ ປະກອບສ່ວນລາຍຮັບ (ອາກອນ, ຄ່າຊັບພະຍາກອນ, ເງິນປັນຜົນ)*

*(ຕົວເລກຮອດ ທັນວາ 2023)*
**ຕົວເລກນັບແຕ່ເລີ່ມການດຳເນີນງານມາຮອດປັດຈຸບັນ*

### ການບໍລິຈາກ

- US$1.5 ລ້ານ – ອຸປະກອນການ ແພດ, ໄພນ້ຳຖ້ວມ, ໜ່ວຍກູ້ໄພສຸກເສີນ ແລະ ອື່ນໆ
- US$0.7 ລ້ານ – ຮັບມືກັບການແຜ່ລະບາດຂອງ COVID-19

## ຜົນປະໂຫຍດໂດຍກົງ ໃຫ້ແກ່ລັດຖະບານ ລາວ

| ປະເພດລາຍຈ່າຍ | 2003 | 2004 | 2005 | 2006 | 2007 | 2008 | 2009 | 2010 | 2011 | 2012 | 2013 | 2014 | 2015 | 2016 | 2017 | 2018 | 2019 | 2020 | 2021 | 2022 |
|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|
| ອາກອນກຳໄລ | - | - | 7,085 | 49,597 | 90,416 | 77,982 | 57,519 | 92,273 | 145,250 | 120,200 | 91,045 | 71,339 | 36,151 | - | - | - | 2,000 | 2,200 | 13,348 | 14,682 |
| ຄ່າຊັບພະຍາກອນ (ຄຳ) | 1,407 | 1,669 | 3,112 | 4,376 | 3,347 | 3,549 | 4,732 | 5,800 | 5,024 | 5,491 | 2,538 | 29 | - | - | - | - | - | 3,500 | 14,819 | 17.400 |
| ຄ່າຊັບພະຍາກອນ (ທອງ) | - | - | 4,055 | 16,994 | 19,295 | 18,570 | 14,565 | 20,734 | 31,365 | 30,378 | 30,607 | 27,579 | 22,093 | 17,226 | 17,533 | 20,989 | 19,061 | 11,007 | 2,367 | 2.627 |
| ອາກອນລາຍໄດ້ | 1,101 | 1,538 | 1,943 | 1,947 | 2,727 | 3,893 | 3,377 | 5,053 | 5,055 | 5,877 | 5,728 | 4,404 | 3,767 | 2,644 | 2,511 | 2,562 | 2,332 | 2,549 | 2,967 | 3.397 |
| ຄ່າສຳປະທານທີ່ດິນ | 5 | 33 | 33 | 33 | - | - | 113 | - | 90 | - | 145 | 50 | 50 | 49 | 49 | 49 | 61 | 61 | 61 | 61 |
| ພາສີນ້ຳມັນ+ນ້ຳມັນເຄື່ອງ | - | - | 2,000 | 2,000 | 2,000 | 4,200 | 2,000 | 2,500 | 4,835 | 4,822 | 4,152 | 3,863 | 4,360 | 2,686 | 3,920 | 3,786 | 4,695 | 6,932 | 6,683 | 10,946 |
| ເງິນປັນຜົນ | - | - | - | - | 9,303 | 11,300 | 2,000 | 32,900 | 15,000 | 28,500 | 10,000 | 10,000 | 6,500 | - | - | 27,170 | - | - | - | 5,917 |
| ລາຍຮັບລວມຈ່າຍໃຫ້ລັດຖະບານລາວ | 2,508 | 3,207 | 18,228 | 74,947 | 127,087 | 122,994 | 84,306 | 159,259 | 205,639 | 189,133 | 144,215 | 117,265 | 72,871 | 26,122 | 24,014 | 54,559 | 28,597 | 26,838 | 40,843 | 55,033 |
| ລວມທັງໝົດ | - | - | - | - | - | - | 433,278 | 592,536 | 798,176 | 987,309 | 1,131,525 | 1,248,789 | 1,328,966 | 1,364,449 | 1,388,463 | 1,443,022 | 1,471,619 | 1,498,457 | 1,553,035 | **1,613,723** |

ຕົວເລກທັງໝົດເປັນ US$ ຫົວພັນ (‘000)


**ຕິດຕໍ່ພວກເຮົາ:**
**T:** +856 21 268 226
**E:** lxml.infomation@lxml.la